International Labour Organization
Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC
PLAN INTERNATIONAL
switchasia
ສະຫະພາບ ເອີຣົບ
European Union

# ຄູ່ມືແນະນຳການເຂົ້າເຖິງແຫຼ່ງທຶນ

ສຳລັບ ຈຸນລະວິສາຫະກິດ, ວິສາຫະກິດ
ຂະໜາດນ້ອຍ, ແລະ ກາງ ໃນ ສປປ ລາວ



## ຊຸດເອກະສານຂໍ້ມູນ

ການບໍລິຫານດ້ານການເງິນ ແລະ
ການສະໜັບສະໜູນຈຸນລະວິສາຫະກິດ,
ວິສາຫະກິດຂະໜາດນ້ອຍ, ແລະ ກາງ
ໃນ ສປປ ລາວ

**2021 - 2022**

## ▶ ຊຸດເອກະສານຂໍ້ມູນ - ການບໍລິການດ້ານການເງິນ ແລະ ການສະໜັບສະໜູນຈຸນລະວິສາຫະກິດ, ວິສາຫະກິດ ຂະໜາດນ້ອຍ ແລະ ກາງ ໃນ ສປປ ລາວ.

ການບໍລິການດ້ານການເງິນ ແລະ ການສະໜັບສະໜູນສໍາລັບ:

- ບັນດາທຸລະກິດທີ່ຂຶ້ນທະບຽນ ແລະ ບໍ່ຂຶ້ນທະບຽນ
- ບັນດາທຸລະກິດທີ່ມີພະນັກງານ 1-99 ຄົນ
- ບັນດາທຸລະກິດທີ່ນອນໃນຂະແໜງການທ່ອງທ່ຽວ

ທ່ານຢາກຮູ້ບໍ່ວ່າທຸລະກິດຂອງທ່ານສາມາດເຂົ້າເຖິງການຊ່ວຍເຫຼືອຫຍັງໄດ້ແດ່?

ໃຫ້ສືບຕໍ່ອ່ານເພື່ອຊອກຫາຂໍ້ມູນ ທີ່ກ່ຽວຂ້ອງກັບສະພາບທຸລະກິດຂອງທ່ານຫຼາຍທີ່ສຸດ

# ສາລະບານ


**▶ ຕົວຫຍໍ້ ..... ii**

**▶ 1. ພາບລວມ ..... iii**

A. ບັນດາທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ ..... iii

B. ບັນດາທຸລະກິດທີ່ຂຶ້ນທະບຽນ ..... iii

C. ບັນດາທຸລະກິດດ້ານການທ່ອງທ່ຽວທີ່ຂຶ້ນທະບຽນ ..... iii

D. ທຸລະກິດປະເພດອື່ນໆ ..... iii

**▶ 2. ປະເພດຂອງການບໍລິການດ້ານການເງິນ ແລະ ການສະໜັບສະໜູນ ..... iv**

ການໃຫ້ທຶນສົມທົບ ..... iv

ການຊ່ວຍເຫຼືອດ້ານວິຊາການ ..... iv

ການກູ້ຢືມ ..... iv

**▶ ໝວດ A. ບັນດາທຸລະກິດທີ່ບໍ່ມີໃບຢັ້ງຢືນ ການຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ ..... 1**

A.1 MG: ໜ່ວຍງານຊ່ວຍເຫຼືອທາງດ້ານການດໍາເນີນທຸລະກິດ (BAF) ..... 2

A.2 ສູນບໍລິການ SME ..... 3

A.3 ເງິນກູ້: ສະຖາບັນການເງິນຕ່າງໆ ..... 5

**▶ ໝວດ B. ບັນດາທຸລະກິດທີ່ມີໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ ..... 6**

B.1 MG: ໜ່ວຍງານຊ່ວຍເຫຼືອທາງດ້ານການດໍາເນີນທຸລະກິດ (BAF) ..... 7

B.2 GM: ໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກໍາເປັນສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ (CFAVC) ..... 8

B.3 GM: ໂຄງການຜະລິດກະສິກໍາເປັນສິນຄ້າ ຢູ່ ສປປ ລາວ (LACP) ..... 9

B.4 ສູນບໍລິການ SME ..... 10

B.5 ເງິນກູ້ຢືມຈາກສະຖາບັນການເງິນ ..... 11

**▶ ໝວດ C. ບັນດາທຸລະກິດໃນອຸດສາຫະກໍາການທ່ອງທ່ຽວ ..... 12**

**▶ ໝວດ D. ການເລືອກສະຖາບັນການເງິນທີ່ເໝາະສົມ ..... 14**

D.1 ຄໍາແນະນໍາ ..... 15

D.2 ພາບລວມ - ສະຖາບັນການເງິນຕ່າງໆ ..... 16

D.3 ຂໍ້ມູນຕິດຕໍ່ສໍາລັບສະຖາບັນການເງິນ MSME ຕ່າງໆ ..... 18

**▶ ເອກະສານຊ້ອນທ້າຍ 1: ການຈັດຕັ້ງ ແລະ ສະຖິຕິທາງດ້ານກົດໝາຍ ..... 19**

# ຕົວຫຍໍ້

ໃນເອກະສານນີ້, ມີຫຼາຍຕົວຫຍໍ້ທີ່ຖືກໃຊ້ເພື່ອເຮັດໃຫ້ການອ່ານງ່າຍຂຶ້ນ:

| | |
|---|---|
| **BAF** | Business Assistance Facility ຫຼື ໜ່ວຍງານຊ່ວຍເຫຼືອທາງດ້ານການດຳເນີນທຸລະກິດ |
| **CFAVC** | Climate-Friendly Agribusiness Value Chains Sector Project<br>ຫຼື ໂຄງການ ສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳເປັນສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ |
| **LACP** | Lao PDR Agriculture Competitiveness Project ຫຼື ໂຄງການຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ |
| **MFI** | Microfinance Institution ຫຼື ສະຖາບັນການເງິນຈຸລະພາກ |
| **MG** | Matching-Grant Funding ຫຼື ການໃຫ້ທຶນສົມທົບ |
| **MSME** | Micro, Small, And Medium Enterprise ຫຼື ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ |
| **TA** | Technical Assistance ຫຼື ການຊ່ວຍເຫຼືອດ້ານວິຊາການ |

**ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ:**

ເອກະສານສະບັບນີ້ກ່ຽວຂ້ອງກັບ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs) ເທົ່ານັ້ນ, ໃນຄຳນິຍາມທີ່ນຳໃຊ້ໂດຍສຳນັກງານສະຖິຕິລາວ, ເຊິ່ງລວມມີວິສາຫະກິດທີ່ບໍ່ໄດ້ຂຶ້ນທະບຽນ ແລະ ບໍ່ເປັນທາງການ. ເມື່ອເອກະສານສະບັບນີ້ໃຊ້ຄຳວ່າ "ທຸລະກິດ", ມັນໝາຍເຖິງ MSMEs ເທົ່ານັ້ນ, ບໍ່ແມ່ນບໍລິສັດຂະໜາດໃຫຍ່. ສຳລັບຄຳນິຍາມຢ່າງເປັນທາງການຂອງ MSMEs ແລະ ສະຖິຕິກ່ຽວກັບປະຊາກອນ MSME ໃນ ສປປ ລາວ, ກະລຸນາເບິ່ງເອກະສານຊ້ອນທ້າຍ.




@ILO

# 1. ພາບລວມ

| | ປະເພດທຸລະກິດຂອງຂ້ອຍ | ປະເພດຂອງການບໍລິການດ້ານການເງິນ ແລະ ການສະໜັບສະໜູນ | ອ່ານຂໍ້ມູນຕື່ມໄດ້ທີ່ |
|---|---|---|---|
| A | ບັນດາທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ | ການໃຫ້ທຶນສົມທົບ, ການຊ່ວຍເຫຼືອດ້ານວິຊາການ ແລະ ການໃຫ້ທຶນກູ້ຢືມ | ໝວດ A |
| B | ບັນດາທຸລະກິດທີ່ຂຶ້ນທະບຽນ | ການໃຫ້ທຶນສົມທົບ, ການຊ່ວຍເຫຼືອດ້ານວິຊາການ ແລະ ການໃຫ້ທຶນກູ້ຢືມ | ໝວດ B |
| C | ບັນດາທຸລະກິດດ້ານການທ່ອງທ່ຽວ | ທຶນກູ້ຢືມອັດຕາດອກເບັ້ຍຕ່ຳ | ໝວດ C |
| D | ທຸລະກິດປະເພດອື່ນໆ | ສະຖາບັນການເງິນຕ່າງໆທີ່ສຸມໃສ່ MSMEs | ໝວດ D |

## A.ບັນດາທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ

ທຸລະກິດສ່ວນໃຫຍ່ໃນ ສປປ ລາວ ແມ່ນມີຂະໜາດນ້ອຍຫຼາຍ, ດຳເນີນທຸລະກິດແບບຄົວເຮືອນ ແລະ ບໍ່ມີໃບຈົດທະບຽນວິສາຫະກິດຈາກກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ. ເຖິງຢ່າງໃດກໍຕາມ, ກໍຍັງມີການຊ່ວຍເຫຼືອຕ່າງໆທີ່ສາມາດເຂົ້າເຖິງໄດ້ຢູ່. ຖ້າທ່ານດຳເນີນທຸລະກິດຂະໜາດນ້ອຍທີ່ບໍ່ໄດ້ຂຶ້ນທະບຽນ, ໃຫ້ເບິ່ງໃນ **ໝວດ A** ສຳລັບຂໍ້ມູນລາຍລະອຽດກ່ຽວກັບການບໍລິການທາງດ້ານການເງິນ ແລະ ການສະໜັບສະໜູນຕ່າງໆທີ່ມີຢູ່

## B.ບັນດາທຸລະກິດທີ່ຂຶ້ນທະບຽນ

27% ຂອງບັນດາທຸລະກິດໃນ ສປປ ລາວ ມີໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດ. ຖ້າທຸລະກິດຂອງທ່ານມີໃບຢັ້ງຢືນຈາກກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື ຈາກ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ມີພະນັກງານໜ້ອຍກວ່າ 100 ຄົນ, ໃຫ້ເບິ່ງໃນ **ໝວດ B** ສຳລັບຂໍ້ມູນລາຍລະອຽດກ່ຽວກັບການບໍລິການທາງດ້ານການເງິນ ແລະ ການສະໜັບສະໜູນຕ່າງໆທີ່ມີຢູ່.

## C.ບັນດາທຸລະກິດດ້ານການທ່ອງທ່ຽວທີ່ຂຶ້ນທະບຽນ

COVID-19 ໄດ້ສົ່ງຜົນກະທົບຕໍ່ອຸດສາຫະກຳການທ່ອງທ່ຽວໃນປະເທດລາວຢ່າງຫຼາກຫຼາຍຮູບແບບ. ຖ້າທ່ານເປັນເຈົ້າຂອງ ຫຼື ຄຸ້ມຄອງທຸລະກິດທີ່ຂຶ້ນທະບຽນຢູ່ໃນຂະແໜງການທ່ອງທ່ຽວທີ່ມີພະນັກງານໜ້ອຍກວ່າ 100 ຄົນ, ໃຫ້ເບິ່ງໃນ **ໝວດ C** ສຳລັບຂໍ້ມູນລາຍລະອຽດກ່ຽວກັບການບໍລິການທາງດ້ານການເງິນ ແລະ ການສະໜັບສະໜູນຕ່າງໆທີ່ມີຢູ່.

## D.ທຸລະກິດປະເພດອື່ນໆ

ຖ້າທ່ານເປັນເຈົ້າຂອງ ຫຼື ດຳເນີນທຸລະກິດທີ່ມີພະນັກງານໜ້ອຍກວ່າ 100 ຄົນ, ມີກຸ່ມສະຖາບັນການເງິນຕ່າງໆທີ່ສຸມໃສ່ສະໜອງການບໍລິການໃຫ້ທຶນກູ້ຢືມແກ່ທ່ານ. ສຳລັບຂໍ້ມູນກ່ຽວກັບເງິນກູ້, ໃຫ້ເບິ່ງ **ໝວດ D** ສຳລັບພາບລວມຂອງທະນາຄານ ແລະ ສະຖາບັນການເງິນຈຸລະພາກຕ່າງໆ (MFIs) ທີ່ເນັ້ນໃສ່ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSMEs).

# 2. ປະເພດຂອງການບໍລິການດ້ານການເງິນ ແລະ ການສະໜັບສະໜູນ

ມີສາມປະເພດຕົ້ນຕໍຂອງການບໍລິການທາງດ້ານການເງິນ ແລະ ການສະໜັບສະໜູນທີ່ມີຢູ່ສໍາລັບທຸລະກິດທັງໝົດ. ຕາຕະລາງຂ້າງລຸ່ມນີ້ຊ່ວຍລະບຸວ່າປະເພດໃດທີ່ເໝາະສົມກັບສະພາບທຸລະກິດຂອງທ່ານ.

| ປະເພດ | ຜົນປະໂຫຍດຫຼັກ | ຜົນປະໂຫຍດເພີ່ມຕື່ມ |
|---|---|---|
| ການໃຫ້ທຶນສົມທົບ | ໃຫ້ທຶນສົມທົບຊ່ວຍເຫຼືອລ້າໃຫ້ແກ່ທ່ານສໍາລັບການລົງທຶນໃນການປັບປຸງທຸລະກິດຂອງທ່ານ | ການຊ່ວຍເຫຼືອດ້ານວິຊາການແກ່ທຸລະກິດເພື່ອສ້າງແຜນທຸລະກິດ |
| ການຊ່ວຍເຫຼືອດ້ານວິຊາການ | ຊ່ວຍທ່ານໃນການສ້າງ ແລະ ນໍາໃຊ້ລະບົບການບໍລິຫານທຸລະກິດ | ການເຂົ້າເຖິງແຫຼ່ງທຶນກູ້ຢືມ ຂອງລັດຖະບານ (ນະໂຍບາຍພິເສດ) |
| ການກູ້ຢືມ | ສະໜອງທຶນສໍາລັບການຂະຫຍາຍກິດຈະການທຸລະກິດຂອງທ່ານ | ສະໜອງອັດຕາດອກເບັ້ຍຕໍ່າສໍາລັບບາງກິດຈະການ |

## ການໃຫ້ທຶນສົມທົບ

ການໃຫ້ທຶນສົມທົບສາມາດຊ່ວຍເຈົ້າຂອງທຸລະກິດລົງທຶນໃນການປັບປຸງການດໍາເນີນງານໂດຍການຈ່າຍຄືນ 50% ຫຼື ຫຼາຍກວ່ານັ້ນຂອງຈໍານວນເງິນລົງທຶນ. ແຜນການໃຫ້ທຶນສົມທົບໂດຍທົ່ວໄປຈະປະກອບມີການຊ່ວຍເຫຼືອດ້ານວິຊາການເພີ່ມເຕີມທີ່ບໍ່ເສຍຄ່າໃຊ້ຈ່າຍ, ເພື່ອສະໜັບສະໜູນການພັດທະນາແຜນຍຸດທະສາດໃນການດໍາເນີນທຸລະກິດ.

## ການຊ່ວຍເຫຼືອດ້ານວິຊາການ

ການຊ່ວຍເຫຼືອດ້ານວິຊາການ ສາມາດຊ່ວຍເຈົ້າຂອງທຸລະກິດໃຫ້ເຂົ້າໃຈດ້ານການເງິນໄດ້ດີຂຶ້ນ ລວມທັງ: ລາຍຮັບ, ລາຍຈ່າຍ, ຜົນກໍາໄລ ແລະ ໂອກາດການກູ້ຢືມຕ່າງໆ. ການຊ່ວຍເຫຼືອທີ່ບໍ່ເສຍຄ່າໃຊ້ຈ່າຍນີ້ຈະຊ່ວຍສ້າງລະບົບການຄຸ້ມຄອງທຸລະກິດ ພື້ນຖານເພື່ອກະກຽມໃນການສະເໜີ ກູ້ຢືມເງິນ. ເພື່ອເຮັດໃຫ້ທຸລະກິດທີ່ຂຶ້ນທະບຽນມີຄຸນນະສົມບັດພຽງພໍສໍາລັບການຂໍທຶນລັດຖະບານໃນອັດຕາດອກເບັ້ຍຕໍ່າ, ການຊ່ວຍເຫຼືອດ້ານວິຊາການ ແມ່ນຍັງມີຄວາມຈໍາເປັນ.

## ການກູ້ຢືມ

ການກູ້ຢືມເງິນຈາກສະຖາບັນການເງິນຕ່າງໆສາມາດຊ່ວຍໃຫ້ເຈົ້າຂອງທຸລະກິດຂະຫຍາຍກິດຈະການວິສາຫະກິດຕ່າງໆໄດ້. ເງິນກູ້ລວມເຖິງຈໍານວນເງິນຕົ້ນທີ່ກູ້ຢືມ ແລະ ຈ່າຍຄືນຕາມເວລາພ້ອມດ້ວຍດອກເບັ້ຍ. ໃນບາງກໍລະນີ, ສະຖາບັນການເງິນຕ່າງໆສາມາດສະໜອງເງິນກູ້ໃນອັດຕາດອກເບັ້ຍຕໍ່າໃຫ້ແກ່ MSMEs, ໂດຍການນໍາໃຊ້ທຶນຊ່ວຍເຫຼືອຈາກລັດຖະບານ ແລະ ໂຄງການຄູ່ຮ່ວມພັດທະນາຕ່າງໆ.




# ▶ ໝວດ A.

## ບັນດາທຸລະກິດທີ່ບໍ່ມີໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ

©ILO

### ▶ ຕາຕະລາງ A - ບັນດາທຸລະກິດທີ່ບໍ່ໄດ້ລົງທະບຽນ

| ສະພາບທຸລະກິດ | ການຊ່ວຍເຫຼືອຕ່າງໆ ທີ່ມີຢູ່ | ລາຍລະອຽດ |
|---|---|---|
| ຂ້ອຍຕ້ອງການໃຫ້ທຸລະກິດຂອງຂ້ອຍປະສົບຜົນສໍາເລັດຫຼາຍຂຶ້ນ, ມີລູກຄ້າຫຼາຍຂຶ້ນ, ມີລາຍໄດ້ ຫຼື ກໍາໄລຫຼາຍຂຶ້ນ, ແຕ່ຂ້ອຍບໍ່ຮູ້ວິທີການ. | 1. ການສະໜັບສະໜູນດ້ານວິຊາການທີ່ບໍ່ເສຍຄ່າໃຊ້ຈ່າຍ ເພື່ອສ້າງ ຫຼື ປັບປຸງແຜນທຸລະກິດ<br>2. ການໃຫ້ທຶນສົມທົບຊ່ວຍເຫຼືອລ້າເຄິ່ງໜຶ່ງຂອງການລົງທຶນໃນການຮັບຄໍາປຶກສາຈາກ ຜູ້ ຊ່ຽວຊານເພື່ອສູງຍົກຄຸນະພາບການຜະລິດ ແລະ ກໍາໄລ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ A.1 ໜ່ວຍງານຊ່ວຍເຫຼືອທາງທຸລະກິດ** |
| ຂ້ອຍຕ້ອງການສ້າງຕັ້ງລະບົບຄຸ້ມຄອງ ທຸລະກິດ ຂອງຂ້ອຍ ເພື່ອໃຫ້ຂ້ອຍເຂົ້າໃຈໄດ້ດີຂຶ້ນວ່າຂ້ອຍກໍາລັງສ້າງກໍາໄລໄດ້ຫຼາຍເທົ່າໃດ ແລະ ອາດກຽມຄວາມພ້ອມໃນການຍື່ນຂໍເງິນກູ້ຢູ່ທະນາຄານ ຫຼື ສະຖາບັນການເງິນຈຸລະພາກໃນອະນາຄົດ. | ການຝຶກອົບຮົມທີ່ບໍ່ເສຍຄ່າໃຊ້ຈ່າຍໃນຫົວຂໍ້ການສ້າງລະບົບຄຸ້ມຄອງທຸລະກິດ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ A.2 ສູນບໍລິການ SME** |
| ຂ້ອຍຕ້ອງການກູ້ຢືມເງິນເພາະວ່າທຸລະກິດຂອງຂ້ອຍກໍາລັງເຮັດໄດ້ດີ ແລະ ຂ້ອຍຕ້ອງການທີ່ຈະເຕີບໂຕ ຫຼື ລົງທຶນເພື່ອໃຫ້ປະສົບຜົນສໍາເລັດຫຼາຍຂຶ້ນ. | ເງິນກູ້ຈາກທະນາຄານ ແລະ ສະຖາບັນການເງິນຈຸລະພາກ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ A.3 ສະຖາບັນການເງິນຕ່າງໆ** |

## ▸ A.1 MG: ໜ່ວຍງານຊ່ວຍເຫຼືອທາງດ້ານການດໍາເນີນທຸລະກິດ (BAF)

#### ນີ້ແມ່ນສະພາບການດໍາເນີນທຸລະກິດຂອງທ່ານບໍ່?

ທ່ານ ແລະ ຄອບຄົວຂອງທ່ານດໍາເນີນທຸລະກິດຄອບຄົວຂະໜາດນ້ອຍ ຫຼື ທີ່ບໍ່ໄດ້ຂຶ້ນທະບຽນ. ທ່ານຢາກສ້າງຄວາມປ່ຽນແປງເພື່ອປັບປຸງທຸລະກິດຂອງທ່ານ ເຊັ່ນ:

- ເພີ່ມອັດຕາກໍາໄລ
- ປັບປຸງຜະລິດຕະພັນ
- ຍົກລະດັບວຽກງານການຜະລິດ

ຖ້າທ່ານສົນໃຈໃນການສ້າງຄວາມປ່ຽນແປງເຫຼົ່ານີ້ ແລະ ຕ້ອງການ ການບໍລິການໃຫ້ຄໍາແນະນໍາຕ່າງໆຈາກຜູ້ຊ່ຽວຊານໃນລາຄາທີ່ເໝາະສົມ, BAF ສາມາດຊ່ວຍໄດ້.

#### BAF ຊ່ວຍທ່ານໄດ້ແນວໃດ?

- ຈັດຫາທີ່ປຶກສາມືອາຊີບ ເພື່ອສົນທະນາ ແລະ ຮັບຟັງທ່ານ, ວິເຄາະທຸລະກິດຂອງທ່ານ, ໃຫ້ຄໍາແນະນໍາທີ່ບໍ່ເສຍຄ່າໃຊ້ຈ່າຍ.
  - ຖ້າທ່ານບໍ່ມີແຜນທຸລະກິດ: ທີ່ປຶກສາຈະຊ່ວຍສ້າງແຜນດໍາເນີນທຸລະກິດບໍ່ເກີນຫ້າໜ້າໃຫ້ທ່ານ
  - ຖ້າທ່ານມີແຜນທຸລະກິດເປັນທີ່ຮຽບຮ້ອຍແລ້ວ: ທີ່ປຶກສາຈະວິເຄາະແຜນຂອງທ່ານ ແລະ ໃຫ້ຄໍາແນະນໍາໃນການປັບປຸງທຸລະກິດຂອງທ່ານ
- ແນະນໍາໃຫ້ຮູ້ຈັກ ຊ່ຽວຊານທີ່ຈໍາເປັນເພື່ອຊ່ວຍໃຫ້ທ່ານຈັດຕັ້ງປະຕິບັດແຜນທຸລະກິດຂອງທ່ານ - BAF ຈະຊ່ວຍທ່ານເຈລະຈາສັນຍາ ແລະ ຈ່າຍຄືນໃຫ້ທ່ານໄດ້ເຖິງ 50% ຂອງຄ່າໃຊ້ຈ່າຍທັງໝົດ.

#### ເງື່ອນໄຂການໄດ້ຮັບສິດ:

ການຊ່ວຍເຫຼືອນີ້ແມ່ນເປີດກວ້າງໃຫ້ກັບເຈົ້າຂອງທຸລະກິດເອກະຊົນທັງໝົດໃນ ສປປ ລາວ, ລວມທັງທຸລະກິດຂະໜາດນ້ອຍ ແລະ ທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ. ບໍ່ມີການກໍານົດທຶນຕໍ່າສຸດໃນການສະໜອງການຊ່ວຍເຫຼືອ ແຕ່ເພດານສູງສຸດຕໍ່ການຊ່ວຍເຫຼືອແມ່ນ 200,000USD / ວິສາຫະກິດ.

#### ເງື່ອນໄຂຂອງທຸລະກິດທີ່ບໍ່ເຂົ້າເກນມາດຖານໃນການຮັບທຶນ:

- ຜະລິດ/ຂາຍອາວຸດ, ເຫຼົ້າ ຫຼື ຢາສູບ
- ດໍາເນີນທຸລະກິດໃນຂະແໜງການເງິນ, ໂທລະຄົມມະນາຄົມ, ບໍ່ແຮ່ ແລະ ໄຟຟ້າ
- ບັນດາທຸລະກິດທີ່ບໍລິຫານໂດຍລັດ (ລັດວິສາຫະກິດ)

**ຂັ້ນຕອນການສະໝັກເພື່ອຂໍການສະໜັບສະໜູນຂອງ BAF:**

- ລົງທະບຽນອອນໄລນ໌ທີ່:
  - https://baflaos.com/la/users/sign_up **(ພາສາລາວ)**
  - https://baflaos.com/en/users/sign_up **(ພາສາອັງກິດ)**
- ຫຼັງຈາກການລົງທະບຽນ, ທີ່ປຶກສາທຸລະກິດຂອງ BAF ຈະຊ່ວຍທ່ານເຂົ້າມາສະໝັກທີ່ຫ້ອງການຂອງ BAF ຫຼື ທາງອອນໄລນ໌

**ຕິດຕໍ່ BAF:**

- **ເວັບໄຊທ໌:** https://baflaos.com/
- **ອີເມວ:** info@baflaos.com
- **ເຟສບຸກ:** www.facebook.com/baflaos
- **ໂທລະສັບ:** +856 (0)20 5554 2658 (ວັນຈັນ-ວັນສຸກ: 09:00-17:00)
- **ທີ່ຢູ່ຫ້ອງການ:** ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ (ຫ້ອງ #20), ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

*BAF ແມ່ນຖືກສ້າງຕັ້ງຂຶ້ນໂດຍລັດຖະບານທີ່ໄດ້ຮັບການສະໜັບສະໜູນຈາກ Australian Aid, Irish Aid, USAID ແລະ ທະນາຄານໂລກ. ແຜນງານນີ້ດໍາເນີນໄປຈົນຮອດເດືອນພຶດສະພາ 2024.*

## A.2 ສູນບໍລິການ SME

**ນີ້ແມ່ນສະພາບການດໍາເນີນທຸລະກິດຂອງທ່ານບໍ່?**

ທ່ານ ແລະ ຄອບຄົວຂອງທ່ານດໍາເນີນທຸລະກິດຂະໜາດນ້ອຍ, ທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຕ້ອງການເຂົ້າໃຈສະພາບທາງການເງິນຕ່າງໆຂອງທ່ານໃຫ້ດີຂຶ້ນ (ຄ່າໃຊ້ຈ່າຍ, ຜົນກໍາໄລ, ທາງເລືອກຕ່າງໆ ໃນການກູ້ຢືມເງິນ) ເພື່ອຕັດສິນໃຈທາງດ້ານທຸລະກິດທີ່ດີກວ່າ.

**ສູນບໍລິການ SME ຊ່ວຍທ່ານໄດ້ແນວໃດ?**

- ສະໜອງຫຼັກສູດຝຶກອົບຮົມທີ່ບໍ່ໄດ້ເສຍຄ່າໃຊ້ຈ່າຍ ເຊິ່ງກວມເອົາ:
  - ການສ້າງລະບົບຄຸ້ມຄອງທຸລະກິດພື້ນຖານ
  - ການວາງແຜນທຸລະກິດ ແລະ ການຄຸ້ມຄອງດ້ານການເງິນ

**ເງື່ອນໄຂການໄດ້ຮັບສິດ:**

- ບໍ່ມີເງື່ອນໄຂການໄດ້ຮັບສິດ - ແນວໃດກໍຕາມ, ເນື່ອງຈາກວ່າຫຼັກສູດຕ່າງໆເປັນທີ່ນິຍົມ, ທ່ານອາດຕ້ອງລໍຖ້າຈົນກ່ວາຈະມີການເປີດຮັບສະໝັກຝຶກອົບຮົມ
- ແຕ່ລະຫຼັກສູດການຝຶກອົບຮົມມີຜູ້ເຂົ້າຮ່ວມຢ່າງໜ້ອຍ 15 ຄົນ ແລະ ສູງສຸດບໍ່ເກີນ 30 ຄົນ
- ການຝຶກອົບຮົມແມ່ນມີຢູ່ 4 ແຫ່ງຄື: ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຈໍາປາສັກ ແລະ ຫຼວງພະບາງ

**ການສະໝັກເຂົ້າຮັບການຝຶກອົບຮົມ ຂອງສູນບໍລິການ SME:**

- ມັນບໍ່ມີຂັ້ນຕອນການສະໝັກຢ່າງເປັນທາງການ. ທ່ານພຽງແຕ່ຕ້ອງຕິດຕໍ່ກັບສູນບໍລິການ SME ແລະ ຂໍເຂົ້າຮ່ວມໃນການຝຶກອົບຮົມຄັ້ງຕໍ່ໄປ.

**ທ່ານສາມາດຕິດຕໍ່ສູນບໍລິການ SME:**

- **ເວັບໄຊທ໌:** https://smelaos.com/
- **ອີເມວ:** info@smelaos.com ແລະ smeservicecenter.laos@gmail.com
- **ເຟສບຸກ:** www.facebook.com/smeservicecenter

- **ທີ່ຢູ່ຫ້ອງການ:**
  - **ນະຄອນຫຼວງວຽງຈັນ**: ສູນບໍລິການ SME (SSC), ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ, ຖະໜົນ ໄກສອນ ພົມວິຫານ, ບ້ານ ໂພນພະເນົາ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. +856 (0)21 416 266-7
  - **ຫຼວງພະບາງ:** ສູນບໍລິການ SME (SSC), ຖະໜົນ ສັກກະລິນ, 002/1 ບ້ານ ວັດແສນ. +856 (0) 71 252 383
  - **ຈຳປາສັກ:** ສູນບໍລິການ SME (SSC), ບ້ານ ໂພນກຸ້ງ, ເມືອງ ປາກເຊ.+856 (0) 31 254 339
  - **ສະຫວັນນະເຂດ:** ສູນບໍລິການ SME (SSC), ຮ່ອມ ເລກທີ 305/23, ຖະໜົນ ອຸດົມສິນ, ເມືອງ ໄກສອນພົມວິຫານ. +856 (0) 41 253 325-6

*ການຊ່ວຍເຫຼືອນີ້ແມ່ນຖືກສະເໜີເປັນ 10 ຄັ້ງ/ ປີ ເຊິ່ງປະກອບດ້ວຍການຝຶກອົບຮົມໃນຫ້ອງຮຽນທັງໝົດ 4 ມື້ ແລະ ການຝຶກສອນຊ່ອງໜ້າມື້ໜຶ່ງ ແລະ ລວມເຖິງການສະໜອງອຸປະກອນການຝຶກອົບຮົມ. ເນື່ອງຈາກການແຜ່ລະບາດ ຂອງພະຍາດ COVID-19 ໄດ້ສົ່ງຜົນຕໍ່ຕາຕະລາງການຝຶກອົບຮົມ. ດ້ວຍເຫດນັ້ນ, ບຸກຄົນທີ່ສົນໃຈຄວນຕິດຕໍ່ສູນບໍລິການ SME ສຳລັບຂໍ້ມູນໃໝ່ຫຼ້າສຸດ.*



@ILO

## A.3 ເງິນກູ້: ສະຖາບັນການເງິນຕ່າງໆ

### ຂໍ້ມູນສຳຄັນ

ການກູ້ຢືມເງິນແມ່ນມີຄວາມສ່ຽງ ແລະ ຄວນຈະເຮັດຢ່າງລະມັດລະວັງ. ໃນຖານະເຈົ້າຂອງທຸລະກິດ, ມັນເປັນຄວາມຮັບຜິດຊອບຂອງທ່ານທີ່ຈະກູ້ຈຳນວນທີ່ ເໝາະສົມທີ່ທ່ານຈະສາມາດຈ່າຍຄືນໄດ້. ສິ່ງສຳຄັນທຳອິດແມ່ນການສ້າງລະບົບການຄຸ້ມຄອງທຸລະກິດພື້ນຖານເພື່ອຕິດຕາມສະພາບການເງິນຂອງທ່ານ (ເບິ່ງ **ໝວດ A.2**.). ນອກນັ້ນ ທ່ານສາມາດກັບໄປອ່ານລາຍຊື່ສະຖາບັນການເງິນທີ່ລະບຸໄວ້ໃນ **ໝວດ D**, ເຊິ່ງບັນດາສະຖາບັນສ່ວນໃຫຍ່ເຕັມໃຈທີ່ຈະໃຫ້ຄຳແນະນຳຕ່າງໆກ່ຽວກັບໂອກາດ ແລະ ການກະກຽມຄຳຮ້ອງສຳລັບການກູ້ຢືມເງິນ.

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານ ຫຼື ຄອບຄົວຂອງທ່ານດຳເນີນທຸລະກິດຄອບຄົວຂະໜາດນ້ອຍ ຫຼື ບໍ່ໄດ້ຂຶ້ນທະບຽນ ທີ່ບໍ່ມີໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດ. ທຸລະກິດຂອງທ່ານດຳເນີນໄປໄດ້ດີ ແລະ ທ່ານເຫັນໂອກາດຕ່າງໆທີ່ຈະເຕີບໂຕ, ແຕ່ບໍ່ມີເງິນທຶນພຽງພໍ. ບາງທີທ່ານກຳລັງກູ້ຢືມເງິນກັບທະນາຄານໃດໜຶ່ງຢູ່ແລ້ວ ແຕ່ທ່ານຕ້ອງການຊອກຫາແຫຼ່ງກູ້ຢືມເງິນທາງເລືອກອື່ນ ທີ່ມີເງື່ອນໄຂທີ່ດີກວ່າ.

**ເງື່ອນໄຂການໄດ້ຮັບສິດເງິນກູ້:**

ບັນດາສະຖາບັນການເງິນເຊັ່ນ: ທະນາຄານ, ບໍລິສັດປ່ອຍສິນເຊື່ອ ແລະ ສະຖາບັນການເງິນຈຸລະພາກຕ່າງໆ ກຳລັງຊອກຫາລູກຄ້າຜູ້ທີ່ມີເງື່ອນໄຂໃນການກູ້ຢືມພື້ນຖານ ແຕ່ຂາດເງື່ອນໄຂສຳຄັນບາງຢ່າງ: ທ່ານຕ້ອງສາມາດສະແດງໃຫ້ເຫັນວ່າທ່ານສາມາດຊຳລະຄືນເງິນກູ້ໄດ້! ເຊິ່ງເງື່ອນໄຂສະເພາະຕ່າງໆແມ່ນຂຶ້ນກັບປະເພດຂອງເງິນກູ້ ແລະ ນະໂຍບາຍຂອງສະຖາບັນການເງິນນັ້ນ.

ຊຸດຂໍ້ມູນນີ້ແມ່ນຈະຊ່ວຍທ່ານໃຫ້ເຫັນພາບລວມ ແລະ ສິ່ງທີ່ທ່ານຈະໄດ້ຮັບ.

**ທ່ານສາມາດສະໝັກໄດ້ຢູ່ໃສ:**

ໃຫ້ເບິ່ງ **ໝວດ D** ສຳລັບບັນຊີລາຍຊື່ຂອງທະນາຄານ ແລະ ສະຖາບັນການເງິນຈຸລະພາກຕ່າງໆທີ່ພວກເຮົາຢາກແນະນຳ.



# ໝວດ B.

## ບັນດາທຸລະກິດທີ່ມີໃບຢັ້ງຢືນ ການຂຶ້ນທະບຽນວິສາຫະກິດຢ່າງເປັນທາງການ

©ILO

▶ **ຕາຕະລາງ B – ບັນດາທຸລະກິດທີ່ຂຶ້ນທະບຽນ**

| ສະພາບທຸລະກິດ | ການຊ່ວຍເຫຼືອຕ່າງໆ ທີ່ມີຢູ່ | ລາຍລະອຽດ |
|---|---|---|
| ຂ້ອຍຕ້ອງການໃຫ້ທຸລະກິດຂອງຂ້ອຍປະສົບຜົນສຳເລັດຫຼາຍຂຶ້ນ, ມີລູກຄ້າຫຼາຍຂຶ້ນ, ລາຍໄດ້ ຫຼື ກຳໄລຫຼາຍຂຶ້ນ, ແຕ່ຂ້ອຍບໍ່ຮູ້ວິທີການ | 1. ການສະໜັບສະໜູນດ້ານວິຊາການທີ່ບໍ່ເສຍຄ່າໃຊ້ຈ່າຍເພື່ອສ້າງ ຫຼື ປັບປຸງແຜນທຸລະກິດ<br>2. ການໃຫ້ທຶນສົມທົບຊ່ວຍເຫຼືອລ້າເຄິ່ງໜຶ່ງຂອງການລົງທຶນໃນການຮັບຄຳປຶກສາຈາກ ຜູ້ ຊ່ຽວຊານເພື່ອສູງຍົກຄຸນະພາບການຜະລິດ ແລະ ກຳໄລ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ B.1 ໜ່ວຍງານຊ່ວຍເຫຼືອທາງທຸລະກິດ** |
| ຂ້ອຍເປັນເຈົ້າຂອງໂຮງສີເຂົ້າ, ສາງເກັບຜັກ ແລະຕະຫຼາດ, ຫຼື ໂຮງງານຜະລິດຝຸ່ນຊີວະພາບ ແລະ ຕ້ອງການຍົກລະດັບຄຸນນະພາບ ແລະ ປະສິດທິຜົນໃນການດຳເນີນທຸລະກິດຂອງຂ້ອຍ. | ການໃຫ້ທຶນສົມທົບມີມູນຄ່າ 60% ຂອງລາຍຈ່າຍ ສຳລັບການຊ່ວຍເຫຼືອດ້ານວິຊາການ ຫຼື ການລົງທຶນໃນເຄື່ອງຈັກ ແລະ/ຫຼື ອຸປະກອນທີ່ຍົກລະດັບປະສິດທິພາບຂອງການດຳເນີນທຸລະກິດ. | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ B.2 ໂຄງການ CFAVC** |
| ຂ້ອຍເປັນເຈົ້າຂອງຫຼາຍທຸລະກິດທີ່ມີກຳໄລ:<br>• ໂຮງສີເຂົ້າ, ໂຮງສີສາລີ ແລະ/ຫຼື ບໍລິສັດປຸງແຕ່ງພືດສວນທີ່ກ່ຽວຂ້ອງ ແລະ/ຫຼື ບໍລິສັດການຄ້າ; ແລະ<br>• ບໍລິສັດຕັ້ງຢູ່ໃນແຂວງຄຳມ່ວນ, ບໍລິຄຳໄຊ, ໄຊຍະບູລີ ແລະ ແຂວງວຽງຈັນ ຫຼື ນະຄອນຫຼວງວຽງຈັນ; ແລະ<br>• ຂ້ອຍຕ້ອງການຍົກລະດັບຄຸນນະພາບ ແລະ ປະສິດທິຜົນໃນການດຳເນີນທຸລະກິດຂອງຂ້ອຍ. | ການໃຫ້ທຶນສົມທົບມີມູນຄ່າ 50% ຂອງລາຍຈ່າຍ ສຳລັບການຊ່ວຍເຫຼືອດ້ານວິຊາການ ຫຼື ການລົງທຶນໃນເຄື່ອງຈັກ ແລະ/ຫຼື ອຸປະກອນການປຸງແຕ່ງກະສິກຳທີ່ຍົກລະດັບປະສິດທິພາບຂອງການດຳເນີນທຸລະກິດ, ລວມທັງ ການຈັດການຫຼັງການເກັບກ່ຽວເພື່ອປັບປຸງຄຸນະພາບຜະລິດຕະພັນ ແລະ ຫຼຸດຜ່ອນການສູນເສຍຫຼັງການເກັບກ່ຽວ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ B.3 ໂຄງການ LACP** |
| ຂ້ອຍຕ້ອງການສ້າງຕັ້ງລະບົບຄຸ້ມຄອງ ທຸລະກິດ ຂອງຂ້ອຍ ເພື່ອໃຫ້ຂ້ອຍເຂົ້າໃຈໄດ້ດີຂຶ້ນວ່າຂ້ອຍກຳລັງສ້າງກຳໄລໄດ້ຫຼາຍເທົ່າໃດ ແລະ ອາດກຽມຄວາມພ້ອມໃນການຍື່ນຂໍເງິນກູ້ຢູ່ທະນາຄານ ຫຼື ສະຖາບັນການເງິນຈຸລະພາກໃນອະນາຄົດ. | ການຝຶກອົບຮົມທີ່ບໍ່ເສຍຄ່າໃຊ້ຈ່າຍໃນຫົວຂໍ້ການສ້າງລະບົບຄຸ້ມຄອງທຸລະກິດ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ B.4 ສູນບໍລິການ SME** |
| ຂ້ອຍຕ້ອງການກູ້ຢືມເງິນເພາະວ່າທຸລະກິດຂອງຂ້ອຍກຳລັງເຮັດໄດ້ດີ ແລະ ຂ້ອຍຕ້ອງການທີ່ຈະເຕີບໂຕ ຫຼື ລົງທຶນເພື່ອໃຫ້ປະສົບຜົນສຳເລັດຫຼາຍຂຶ້ນ. | ເງິນກູ້ຈາກທະນາຄານ ແລະ ສະຖາບັນການເງິນຈຸລະພາກ | **ເບິ່ງຂໍ້ມູນດ້ານລຸ່ມຂອງຂໍ້ B.5 ສະຖາບັນການເງິນຕ່າງໆ** |

# B.1 MG: ໜ່ວຍງານຊ່ວຍເຫຼືອທາງດ້ານການດຳເນີນທຸລະກິດ (BAF)

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານ ແລະ ຄອບຄົວຂອງທ່ານດຳເນີນທຸລະກິດຄອບຄົວຂະໜາດນ້ອຍ ຫຼື ທີ່ບໍ່ໄດ້ຂຶ້ນທະບຽນ. ທ່ານຢາກສ້າງຄວາມ ປ່ຽນແປງເພື່ອປັບປຸງທຸລະກິດຂອງທ່ານ ເຊັ່ນ:

- ເພີ່ມອັດຕາກຳໄລ
- ປັບປຸງຜະລິດຕະພັນ
- ຍົກລະດັບວຽກງານການຜະລິດ

ຖ້າທ່ານສົນໃຈໃນການສ້າງຄວາມປ່ຽນແປງເຫຼົ່ານີ້ ແລະ ຕ້ອງການ ການບໍລິການໃຫ້ຄຳແນະນຳຕ່າງໆຈາກຜູ້ຊ່ຽວຊານໃນລາຄາທີ່ເໝາະສົມ, BAF ສາມາດຊ່ວຍໄດ້. ເບິ່ງ**ໜ້າທີ 2** ສຳລັບຂໍ້ມູນເພີ່ມເຕີມ.

# B.2 GM: ໂຄງການສົ່ງເສີມລະບົບຕ່ອງໂສ້ການຜະລິດກະສິກຳເປັນສິນຄ້າທີ່ເປັນມິດຕໍ່ສິ່ງແວດລ້ອມ (CFAVC)

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານເປັນເຈົ້າຂອງ ຫຼື ຄຸ້ມຄອງທຸລະກິດຂ້າງລຸ່ມນີ້ທີ່ມີການຂຶ້ນທະບຽນ ແລະ ໃບອະນຸຍາດ:

1. ໂຮງສີເຂົ້າໃນແຂວງຄຳມ່ວນ, ສາລະວັນ ຫຼື ສະຫວັນນະເຂດ; ຫຼື
2. ສາງເກັບຜັກ ແລະ ຕະຫຼາດໃນນະຄອນຫຼວງວຽງຈັນ, ຈຳປາສັກ ຫຼື ເຊກອງ; ຫຼື
3. ໂຮງງານຜະລິດຝຸ່ນຊີວະພາບຢູ່ແຂວງໃດໜຶ່ງໃນປະເທດລາວ

**ໂຄງການ CFAVC ຊ່ວຍທ່ານໄດ້ແນວໃດ?**

- CFAVC ສະໜອງການໃຫ້ທຶນສົມທົບເຖິງ 60% ຂອງການລົງທຶນທີ່ຕ້ອງການໃນການຊ່ວຍເຫຼືອດ້ານວິຊາການ ຫຼື ໃນເຄື່ອງຈັກ ແລະ ອຸປະກອນ.
- ຂະໜາດທຶນຊ່ວຍເຫຼືອສູງສຸດແມ່ນ 300,000 USD (100,000 USD ສຳລັບໂຮງງານຂະໜາດນ້ອຍ)
- ໂຄງການ CFAVC ຍັງຈະສະໜັບສະໜູນຜູ້ສະໝັກທຶນໃນການສ້າງແຜນທຸລະກິດ

**ເງື່ອນໄຂການໄດ້ຮັບສິດ:**

ຖ້າທ່ານເປັນເຈົ້າຂອງທຸລະກິດການກະເສດ, ພວກເຮົາແນະນຳໃຫ້ທ່ານເຂົ້າຫາໂຄງການ CFAVC ແລະ ຄົ້ນຫາທາງເລືອກທີ່ເປັນໄປໄດ້. ເງື່ອນໄຂພື້ນຖານປະກອບມີ:

1. ສະໜອງລາຍງານການເງິນທີ່ຜ່ານການກວດສອບຢ່າງໜ້ອຍສາມປີຕິດຕໍ່ກັນ
2. ສະໜອງແຜນທຸລະກິດທີ່ໝັ້ນຄົງ
3. ສະໜອງແນວຄວາມຄິດທີ່ຊີ້ບອກເຖິງການນຳໃຊ້ທຶນ ແລະ ພັນທະໃນອະນາຄົດ ທີ່ຈະ:
    a. ຍົກສູງປະສິດທິຜົນຂອງການຜະລິດ
    b. ຫຼຸດຜ່ອນການນຳໃຊ້ນ້ຳ ແລະ ພະລັງງານ, ແລະ
    c. ນຳໃຊ້ພະລັງງານສະອາດ ຫຼື ສີຂຽວ
4. ມີບັນຊີທະນາຄານ
5. ຕອບສະໜອງມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງລະອຽດ
6. ເຂົ້າເຖິງກະສິກຳທາງດ້ານເສດຖະກິດ - ສັງຄົມຂອງຊຸມຊົນຢ່າງກວ້າງຂວາງ

**ວິທີການສະໝັກ:**

ຕິດຕໍ່ກັບພະນັກງານໂຄງການໂດຍຜ່ານຂໍ້ມູນຕິດຕໍ່ຂ້າງລຸ່ມນີ້ເພື່ອຂໍແບບຟອມ. ພະນັກງານຍັງສາມາດຊ່ວຍທ່ານໃນການສ້າງແນວຄວາມຄິດ ແລະ ແຜນໃນການດຳເນີນທຸລະກິດໄດ້.

**ຕິດຕໍ່ CFAVC:**

ເມື່ອຕິດຕໍ່ກັບ CFAVC, ທ່ານຄວນຖາມຫາໜ່ວຍງານຄຸ້ມຄອງການເງິນ (ຫຼື FME) ແລະ ສອບຖາມກ່ຽວກັບໂຄງການ ການໃຫ້ທຶນສົມທົບ, ໂດຍການນຳໃຊ້ຊ່ອງທາງຕໍ່ໄປນີ້:

- **ໂທລະສັບ:** 856 (0) 30 5046 262, 856 (0) 30 4620 707
- **ອີເມວ:** cfavc.lao@gmail.com
- **ເຟສບຸກ:** www.facebook.com/CFAVC

*ຂໍ້ມູນສຳຄັນ: CFAVC ແມ່ນຖືກສ້າງຕັ້ງຂຶ້ນໂດຍລັດຖະບານແຫ່ງ ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກທະນາຄານພັດທະນາອາຊີ. ແຜນງານດັ່ງກ່າວແມ່ນຖືກວາງອອກໃຫ້ດຳເນີນການຮອດປີ 2025.*

# B.3 GM: ໂຄງການຜະລິດກະສິກຳເປັນສິນຄ້າ ຢູ່ ສປປ ລາວ (LACP)

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານເປັນເຈົ້າຂອງ ຫຼື ຄຸ້ມຄອງທຸລະກິດຂ້າງລຸ່ມນີ້ທີ່ມີການຂຶ້ນທະບຽນ, ມີໃບອະນຸຍາດ, ມີກຳໄລ:

1. ໂຮງສີ ຫຼື ໂຮງງານປຸງແຕ່ງເຂົ້າ; ຫຼື
2. ໂຮງສີ ຫຼື ໂຮງງານປຸງແຕ່ງເຂົ້າສາລີ; ຫຼື
3. ບໍລິສັດການຄ້າໂຮງງານປຸງແຕ່ງພືດສວນ



@ILO

ທຸລະກິດການກະເສດຂອງທ່ານຕັ້ງຢູ່ແຂວງ ຄຳມ່ວນ, ບໍລິຄຳໄຊ, ໄຊຍະບູລີ ຫຼື ແຂວງວຽງຈັນ ຫຼື ນະຄອນຫຼວງວຽງຈັນ ແລະ ທ່ານວາງແຜນທີ່ຈະລົງທຶນໃນ:

1. ການຈັດການຫຼັງການເກັບກ່ຽວທີ່ໄດ້ຮັບການປັບປຸງເພື່ອຮັບປະກັນຄຸນະພາບຜະລິດຕະພັນທີ່ສູງຂຶ້ນ ແລະ ຫຼຸດຜ່ອນຄວາມເສຍຫາຍ; ແລະ
2. ການເຊື່ອມໂຍງກັບກຸ່ມການຜະລິດຊາວກະສິກອນເພື່ອຍົກສູງປະສິດທິຜົນທາງການຕະຫຼາດ

**LACP ຊ່ວຍທ່ານໄດ້ແນວໃດ?**

- LACP ສະໜອງທຶນສົມທົບ 50% ສຳລັບການຊ່ວຍເຫຼືອທາງດ້ານວິຊາການ ແລະ ການລົງທຶນໃນເຄື່ອງຈັກ ຫຼື ອຸປະກອນໃໝ່ສຳລັບທຸລະກິດເພື່ອຍົກລະດັບທາງດ້ານການຄຸ້ມຄອງ ແລະ ການດຳເນີນທຸລະກິດ
- ຂະໜາດທຶນຊ່ວຍເຫຼືອສູງສຸດແມ່ນ 125,000 USD ສຳລັບຜູ້ປະກອບການໃນຕ່ອງໂສ້ມູນຄ່າເຂົ້າ ແລະ ສາລີ, ແລະ 25,000 USD ສຳລັບຜູ້ດຳເນີນງານໃນຕ່ອງໂສ້ມູນຄ່າພືດສວນ
- LACP ຍັງຊ່ວຍໃນການກະກຽມ ແລະ ການປະເມີນແຜນນຳສະເໜີທຸລະກິດ ແລະ ແຜນທຸລະກິດຢ່າງລະອຽດ ກ່ອນເຂົ້າຂະບວນການຄັດເລືອກທຸລະກິດການກະເສດ ເຊິ່ງລວມເຖິງການກວດສອບແບບຟອມສະໝັກຂອງພວກເຂົາ.

**ເງື່ອນໄຂການໄດ້ຮັບສິດ:**

ຖ້າທ່ານເປັນເຈົ້າຂອງທຸລະກິດການກະເສດ, ພວກເຮົາແນະນຳໃຫ້ທ່ານເຂົ້າຫາໂຄງການ LACP ແລະ ຄົ້ນຫາທາງເລືອກທີ່ເປັນໄປໄດ້. ເງື່ອນໄຂພື້ນຖານປະກອບມີ:

1. ສະຖານະດ້ານການເງິນ ແລະ ກຳໄລ
2. ສາມາດແຈ້ງໃຫ້ຮັບຮູ້ກ່ຽວກັບບົດລາຍງານດ້ານການເງິນຢ່າງໜ້ອຍ 2 ປີ ກ່ຽວກັບທຸລະກິດທີ່ກຳລັງດຳເນີນຢູ່, ຢ່າງຕໍ່ເນື່ອງ
3. ມີຄວາມສາມາດພຽງພໍທາງດ້ານວິຊາການ ແລະ ການຄຸ້ມຄອງ
4. ຕອບສະໜອງມາດຕະຖານດ້ານສິ່ງແວດລ້ອມ ແລະ ສັງຄົມຢ່າງລະອຽດ

**ຖ້າຂ້ອຍສົນໃຈທີ່ຈະໄດ້ຮັບການສະໜັບສະໜູນຈາກ LACP, ຂ້ອຍສາມາດສະໝັກໄດ້ແນວໃດ?**

ກະລຸນາຕິດຕໍ່ຫ້ອງການ LACP ສຳລັບຄຳແນະນຳກ່ຽວກັບຄຳຮ້ອງ. ພະນັກງານໂຄງການມີຄວາມກະຕືລືລົ້ນທີ່ຈະສະໜັບສະໜູນທ່ານ ແລະ ທີມຊ່ວຍເຫຼືອແມ່ນຍັງມີຢູ່.

**ລາຍລະອຽດການຕິດຕໍ່ LACP:**

ເມື່ອຕິດຕໍ່ກັບ LACP, ທ່ານຄວນຖາມຫາໜ່ວຍງານສົ່ງເສີມຕ່ອງໂສ້ມູນຄ່າກະສິກຳ (ຫຼື AVCF) ຫຼື ອົງການ SNV Netherlands Development Organization, ໂດຍຜ່ານລາຍລະອຽດການຕິດຕໍ່ຂ້າງລຸ່ມນີ້:

- **ເວັບໄຊທ໌:** https://www.lacp-maf.org/
- **ອີເມວ:** daovanhsotouky@snv.org; tsiyavong@snv.org.
- **ໂທລະສັບ:** +856 (0) 30 9193 489; +856 (0) 20 5571 4303
- **ທີ່ຢູ່ຫ້ອງການ:** ອາຄານບໍລິການໂຄງການ MAF-LACP, ຖະໜົນ ໂພນໄຊ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

## B.4 ສູນບໍລິການ SME

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານເປັນເຈົ້າຂອງ ຫຼື ຄຸ້ມຄອງວິສາຫະກິດທີ່ຂຶ້ນທະບຽນ ແລະ ຕ້ອງການທີ່ຈະເຂົ້າໃຈກ່ຽວກັບສະພາບການເງິນຂອງທ່ານໃຫ້ດີກວ່າເກົ່າ ແລະ ວິທີການຕັດສິນໃຈທາງດ້ານທິດທາງໃນການດຳເນີນທຸລະກິດທີ່ດີກວ່າ. ໃນອະນາຄົດ, ທ່ານມີຄວາມສົນໃຈໃນການສະໝັກຂໍເງິນກູ້.

ຖ້າທ່ານມີຄວາມສົນໃຈໃນການສ້າງຄວາມປ່ຽນແປງເຫຼົ່ານີ້, ສູນບໍລິການ SME ສະເໜີຫຼັກສູດການຝຶກອົບຮົມທີ່ບໍ່ເສຍຄ່າໃຊ້ຈ່າຍໃນການສ້າງຕັ້ງ ແລະ ນຳໃຊ້ລະບົບການຄຸ້ມຄອງທຸລະກິດພື້ນຖານສຳລັບບັນດາທຸລະກິດຂະໜາດນ້ອຍ, ລວມທັງການວາງແຜນທຸລະກິດ ແລະ ການຄຸ້ມຄອງທາງດ້ານການເງິນ. ເບິ່ງ **ໜ້າທີ 3** ສຳລັບຂໍ້ມູນເພີ່ມເຕີມ.

# B.5 ເງິນກູ້ຢືມຈາກສະຖາບັນການເງິນ

**ຂໍ້ມູນສຳຄັນ - ພວກເຮົາແນະນຳໃຫ້ທ່ານອ່ານຂໍ້ຄວາມລຸ່ມນີ້ກ່ອນ:**

ການກູ້ຢືມເງິນແມ່ນມີຄວາມສ່ຽງ ແລະ ຄວນຈະເຮັດຢ່າງລະມັດລະວັງ. ໃນຖານະເຈົ້າຂອງທຸລະກິດ, ມັນເປັນຄວາມຮັບຜິດຊອບຂອງທ່ານທີ່ຈະກູ້ຈຳນວນທີ່ ເໝາະສົມທີ່ທ່ານຈະສາມາດຈ່າຍຄືນໄດ້. ສິ່ງສຳຄັນທຳອິດແມ່ນການສ້າງລະບົບການຄຸ້ມຄອງທຸລະກິດພື້ນຖານເພື່ອຕິດຕາມສະພາບການເງິນຂອງທ່ານ (ເບິ່ງ **ໝວດ A.2**.). ນອກນັ້ນ ທ່ານສາມາດກັບໄປອ່ານລາຍຊື່ສະຖາບັນການເງິນທີ່ລະບຸໄວ້ໃນ **ໝວດ D**, ເຊິ່ງບັນດາສະຖາບັນສ່ວນໃຫຍ່ເຕັມໃຈທີ່ຈະໃຫ້ຄຳແນະນຳຕ່າງໆກ່ຽວກັບໂອກາດ ແລະ ການກະກຽມຄຳຮ້ອງສຳລັບການກູ້ຢືມເງິນ.

**ນີ້ແມ່ນສະພາບການດຳເນີນທຸລະກິດຂອງທ່ານບໍ່?**

ທ່ານ ຫຼື ຄອບຄົວຂອງທ່ານດຳເນີນທຸລະກິດຄອບຄົວຂະໜາດນ້ອຍ ຫຼື ບໍ່ໄດ້ຂຶ້ນທະບຽນ ທີ່ບໍ່ມີໃບຢັ້ງຢືນການຂຶ້ນທະບຽນວິສາຫະກິດ. ທຸລະກິດຂອງທ່ານດຳເນີນໄປໄດ້ດີ ແລະ ທ່ານເຫັນໂອກາດຕ່າງໆທີ່ຈະເຕີບໂຕ, ແຕ່ບໍ່ມີເງິນທຶນພຽງພໍ. ບາງທີທ່ານກຳລັງກູ້ຢືມເງິນກັບທະນາຄານໃດໜຶ່ງຢູ່ແລ້ວແຕ່ທ່ານຕ້ອງການຊອກຫາແຫຼ່ງກູ້ຢືມເງິນທາງເລືອກອື່ນ ທີ່ມີເງື່ອນໄຂທີ່ດີກວ່າ ແລະ ການຊ່ວຍເຫຼືອທີ່ຫຼາຍກວ່າ ແລະ ມີການຮ່ວມມືກັບສະຖາບັນການເງິນທີ່ມີຄວາມຊ່ຽວຊານ.

**ເງື່ອນໄຂການໄດ້ຮັບສິດເງິນກູ້:**

ບັນດາສະຖາບັນການເງິນເຊັ່ນ: ທະນາຄານ, ບໍລິສັດປ່ອຍສິນເຊື່ອ ແລະ ສະຖາບັນການເງິນຈຸລະພາກຕ່າງໆ ກຳລັງຊອກຫາລູກຄ້າຜູ້ທີ່ມີເງື່ອນໄຂໃນການກູ້ຢືມພື້ນຖານ ແຕ່ຂາດເງື່ອນໄຂສຳຄັນບາງຢ່າງ: ທ່ານຕ້ອງສາມາດສະແດງໃຫ້ເຫັນວ່າທ່ານສາມາດຊຳລະຄືນເງິນກູ້ໄດ້! ເຊິ່ງເງື່ອນໄຂສະເພາະຕ່າງໆແມ່ນຂຶ້ນກັບປະເພດຂອງເງິນກູ້ ແລະ ນະໂຍບາຍຂອງສະຖາບັນການເງິນນັ້ນ.

ຊຸດຂໍ້ມູນນີ້ແມ່ນຈະຊ່ວຍທ່ານໃຫ້ເຫັນພາບລວມ ແລະ ສິ່ງທີ່ທ່ານຈະໄດ້ຮັບ.

**ທ່ານສາມາດສະໝັກໄດ້ຢູ່ໃສ:**

ໃຫ້ເບິ່ງ **ໝວດ D** ສຳລັບບັນຊີລາຍຊື່ຂອງທະນາຄານ ແລະ ສະຖາບັນການເງິນຈຸລະພາກຕ່າງໆທີ່ພວກເຮົາຢາກແນະນຳ.




# ໝວດ C.

## ບັນດາທຸລະກິດໃນອຸດສາຫະກຳການທ່ອງທ່ຽວ

©ILO

**ລັດຖະບານໄດ້ສະໜອງທຶນທີ່ມີອັດຕາດອກເບັ້ຍຕ່ຳໃຫ້ແກ່ MSME ທີ່ຂຶ້ນທະບຽນ ແລະ ໄດ້ຮັບອະນຸຍາດ ທີ່ກຳລັງດຳເນີນທຸລະກິດໃນ 4 ຂະແໜງການດັ່ງຕໍ່ໄປນີ້:**

1. ຂະແໜງອຸດສາຫະກຳປຸງແຕ່ງ ຜະລິດຕະພັນກະສິກຳ
2. ຂະແໜງຫັດຖະກຳ
3. ຂະແໜງກະສິກຳ ປູກຝັງ ແລະ ລ້ຽງສັດ
4. ຂະແໜງການທ່ອງທ່ຽວ

ໝາຍຄວາມວ່າ MSMEs ໃນຂະແໜງການທ່ອງທ່ຽວຕ້ອງແຂ່ງຂັນກັນເລື່ອງການຂໍທຶນນີ້ກັບ MSMEs ໃນຂະແໜງການອື່ນໆທີ່ໄດ້ລະບຸໄວ້ຂ້າງເທິງ. ມີທະນາຄານສີ່ແຫ່ງທີ່ສະເໜີໃຫ້ທຶນນີ້. ແຕ່ລະທະນາຄານຈະດຳເນີນຂັ້ນຕອນການປະເມີນສິນເຊື່ອ ແລະ ຂັ້ນຕອນໃນການອະນຸມັດຈຳນວນທຶນກູ້ຢືມໃຫ້ແກ່ຜູ້ກູ້ຢືມ. ສີ່ທະນາຄານດັ່ງກ່າວມີຄື:

- ທະນາຄານ ພັດທະນາລາວ
- ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈຳກັດ
- ທະນາຄານ ມາຣູຮານເຈແປນລາວ
- ທະນາຄານ ຊາຄອມແບັງ ລາວ

*ໃນປີ 2019, ລັດຖະບານໄດ້ອອກດຳລັດ (ສະບັບເລກທີ 299/ນຍ, ວັນທີ 04/09/2019) ໃນການລົງທຶນທີ່ສຳຄັນ ສຳລັບ MSMEs ໃນຂະແໜງການເປົ້າໝາຍເຊິ່ງເນື້ອຫາໃນດຳລັດ ລວມມີ: ເງິນກູ້ກັບອັດຕາດອກເບັ້ຍ 3%, ສຳລັບເງິນລົງທຶນ-ໝູນວຽນໃນໄລຍະເວລາສູງສຸດ 5 ປີ ແລະ ການສະໜອງທຶນຊັບສິນຄົງທີ່ສູງສຸດ 10 ປີ ແລະ ມີໄລຍະເວລາຜ່ອນຜັນສູງສຸດເຖິງ 2 ປີ. ທະນາຄານພັດທະນາລາວມີແຫຼ່ງທຶນໃຫ້ກູ້ຢືມເພີ່ມເຕີມໂດຍມີດອກເບັ້ຍລະຫວ່າງ 6.5%-9% ຕໍ່ປີ.*

**ເງື່ອນໄຂການໄດ້ຮັບສິດເງິນກູ້:**

ນອກຈາກເງື່ອນໄຂຕາມມາດຕະຖານທີ່ໄດ້ນຳໃຊ້ໂດຍທະນາຄານທັງສີ່ແຫ່ງ, ມັນຍັງມີສາມເງື່ອນໄຂເພີ່ມເຕີມທີ່ເຂັ້ມງວດ. MSME ດ້ານການທ່ອງທ່ຽວຂອງທ່ານຄວນມີ:

1. ແຜນຍຸດທະສາດການດຳເນີນທຸລະກິດທີ່ຈະແຈ້ງ, ທີ່ຈະຖືກຮັບຮອງໂດຍທະນາຄານ;
2. ການຝຶກອົບຮົມຄວາມຮູ້ດ້ານການເງິນທີ່ຄົບຖ້ວນ ທີ່ຈັດໂດຍຂະແໜງອຸດສາຫະກຳ ແລະ ການຄ້າ ເຊັ່ນ: ໂດຍກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
3. ລະບົບການບັນຊີທີ່ຮັບຮອງໂດຍກົດໝາຍ, ເຊັ່ນ: ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ

## ຂໍ້ມູນການຕິດຕໍ່:

| ທະນາຄານ | ເວັບໄຊທ໌ | ອີເມວ | ໂທ | ເຟສບຸກ |
|---|---|---|---|---|
| ທະນາຄານ ພັດທະນາລາວ | www.ldblao.la | ldblaoho@ldblao.la | 021 213 300-03 | Ldblao |
| ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ | www.laovietbank.com.la | info@laovietbank.com.la | 021 251 418 | LaoVietBank |
| ທະນາຄານ ມາຣູຮານເຈແປນ ລາວ | www.maruhanjapanbanklao.com | customercare@maruhanjapanbanklao.com ແລະ info@maruhanjapanbanklao.com | 021 411 777 | MaruhanJapanBankLao |
| ທະນາຄານ ຊາຄອມແບັງ ລາວ | www.sacombank.com.la | Contact_sl@sacombank.com | 021 267 979 | SacombankLao |



# ໝວດ D.

## ການເລືອກສະຖາບັນການເງິນທີ່ເໝາະສົມ

©ILO

ໝວດ D ສະເໜີພາບລວມຂອງສະຖາບັນການເງິນຕ່າງໆທີ່ມີຈຸດສຸມຍຸດທະສາດໃນການໃຫ້ບໍລິການກູ້ຢືມແກ່ MSMEs (ທັງຂຶ້ນທະບຽນ ແລະ ບໍ່ຂຶ້ນທະບຽນ). ສອງປະເພດຫຼັກຂອງສະຖາບັນການເງິນແມ່ນທະນາຄານ ແລະ ສະຖາບັນການເງິນຈຸລະພາກ (MFIs). ເພື່ອເລືອກສະຖາບັນການເງິນທີ່ເໝາະສົມທີ່ສຸດສໍາລັບສະພາບທຸລະກິດຂອງທ່ານ, ໃຫ້ກວດຄືນຄໍາຖາມຊີ້ນໍາ ແລະ ຕາຕະລາງຂ້າງລຸ່ມນີ້.

**ຂໍ້ມູນສໍາຄັນ:**

ໝວດນີ້ແມ່ນມີຈຸດປະສົງເພື່ອເປັນຄໍາແນະນໍາ ແລະ ໃຫ້ຂໍ້ມູນເທົ່ານັ້ນ. ໃນຖານະເປັນເຈົ້າຂອງທຸລະກິດ ຫຼື ຜູ້ຈັດການ, ທ່ານຕ້ອງໄດ້ຮັບຜິດຊອບຕໍ່ການຕັດສິນໃຈຂອງທ່ານເອງໃນຂັ້ນຕອນການກູ້ຢືມເງິນ. ຂໍ້ແນະນໍາທີ່ຄວນເຮັດກໍຄືໃຫ້ເຮັດບັນຊີລາຍຊື່ຂອງສະຖາບັນການເງິນຕ່າງໆທີ່ກ່ຽວຂ້ອງ ແລະ ຕິດຕໍ່ເຂົາເຈົ້າເພື່ອຮັບຂໍ້ມູນທີ່ຊັດເຈນກວ່າ.

## D.1 ຄໍາແນະນໍາ

**ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍທີ່ບໍ່ຂຶ້ນທະບຽນ:** ສະຖາບັນການເງິນສ່ວນໜ້ອຍເທົ່ານັ້ນທີ່ໃຫ້ເງິນກູ້ແກ່ບັນດາທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ ແລະ ສ່ວນໃຫຍ່ຕ້ອງການ ການຄໍ້າປະກັນເງິນເດືອນເພີ່ມເຕີມ. ທະນາຄານສ່ວນໃຫຍ່ໃຫ້ເງິນກູ້ 100 ລ້ານກີບ ແລະ ຫຼາຍກວ່ານັ້ນ ໃນຂະນະທີ່ເງິນກູ້ຂອງ MFI ມີທ່າອ່ຽງທີ່ຈະຕໍ່າກວ່າ 50 ລ້ານກີບ ຕໍ່ 1 ຫົວໜ່ວຍທຸລະກິດ.

**ຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍທີ່ຂຶ້ນທະບຽນ.** MFIs ແລະ ທະນາຄານສ່ວນໃຫຍ່ທີ່ມີເງື່ອນໄຂເງິນກູ້ຂັ້ນຕໍ່າທີ່ຕໍ່າ (ທະນາຄານເອຊີລີດາ , ທະນາຄານຮ່ວມພັດທະນາ, ທະນາຄານພົງສະຫວັນ ແລະ ທະນາຄານ ST) ແມ່ນເຕັມໃຈທີ່ຈະເຮັດວຽກກັບວິສາຫະກິດຂະໜາດນ້ອຍ ຫຼື ຄົວເຮືອນ ແຕ່ການຄໍ້າປະກັນເງິນເດືອນແມ່ນຍັງຈໍາເປັນຕ້ອງມີ. ທະນາຄານຕ່າງໆທີ່ມີຈໍານວນເງິນກູ້ຂັ້ນຕໍ່າທີ່ສູງກວ່າຈະມີເງື່ອນໄຂທີ່ເຂັ້ມງວດກວ່າກ່ຽວກັບການຢັ້ງຢືນລາຍຮັບ ແລະ ຫຼັກຊັບຄໍ້າປະກັນ. ໂດຍປົກກະຕິແລ້ວ ທະນາຄານທັງໝົດຮຽກຮ້ອງໃຫ້ທ່ານເປີດ ແລະ ນໍາໃຊ້ບັນຊີສໍາລັບທຸລະກໍາທາງດ້ານການເງິນຕ່າງໆທີ່ກ່ຽວຂ້ອງກັບທຸລະກິດ.

**ຂັ້ນຕອນການສະໝັກສໍາລັບທຸລະກິດທີ່ບໍ່ໄດ້ຂຶ້ນທະບຽນ ແລະ ຂະໜາດນ້ອຍ:** ສະຖາບັນການເງິນຕ່າງໆທີ່ສຸມໃສ່ກຸ່ມຕະຫຼາດນີ້ໄດ້ຝຶກອົບຮົມພະນັກງານສິນເຊື່ອຂອງພວກເຂົາເພື່ອໃຫ້ຄວາມຊ່ວຍເຫຼືອໃນການກູ້ຢືມເງິນ. ຢ່າງໃດກໍຕາມ, ການເຂົ້າຫາບັນດາສະຖາບັນການເງິນແມ່ນບາດກ້າວທໍາອິດໃນຂັ້ນຕອນການກູ້ຢືມເງິນ ແລະ ຕ້ອງເລີ່ມຈາກເຈົ້າຂອງທຸລະກິດ ຫຼື ຜູ້ບໍລິຫານ.

**ການຢັ້ງຢືນຕົວຕົນ ແລະ ທີ່ຢູ່:** ການຢັ້ງຢືນຕົວຕົນ ແລະ ທີ່ຢູ່ຄວນເປັນໃນຮູບແບບຂອງປຶ້ມສໍາມະໂນຄົວ ຫຼື ບັດປະຈໍາຕົວ, ແລະ ໃບບິນຂອງບໍລິສັດໄຟຟ້າ ຫຼື ນໍ້າປະປາ. ສໍາລັບການຢືນຢັນແບບສະເພາະເຈາະຈົງ, ສ່ວນໃຫຍ່ແມ່ນຈະເຊັນອະນຸມັດຜ່ານນາຍບ້ານ.

**ການຢັ້ງຢືນລາຍຮັບ:** ສໍາລັບຈຸນລະວິສາຫະກິດ ແລະ ວິສາຫະກິດຂະໜາດນ້ອຍ, ການຢັ້ງຢືນລາຍຮັບແມ່ນຍາກທີ່ຈະເຮັດໄດ້. ສະຖາບັນການເງິນຕ່າງໆທີ່ເລັງໃສ່ກຸ່ມຕະຫຼາດນີ້ ອາດມີນະໂຍບາຍຜ່ອນຜັນກ່ຽວກັບເອກະສານຢັ້ງຢືນຕ່າງໆ ໃນຂັ້ນຕອນການຢືມເງິນ. ແຕ່ສໍາລັບທະນາຄານ ແລະ MFI ອື່ນ, ເງື່ອນໄຂແມ່ນຍັງເຂັ້ມງວດ (ລວມທັງ ໃບລາຍງານການເງິນ, ປຶ້ມບັນທຶກທຸລະກໍາຕ່າງໆ, ສັນຍາ, ໃບແຈ້ງໜີ້, ໃບຮັບເງິນ ຫຼື ໃບແຈ້ງຍອດບັນຊີທະນາຄານ).

**ຫຼັກຊັບຄໍ້າປະກັນ:** ໂດຍທົ່ວໄປແລ້ວ ຫຼັກຊັບຄໍ້າປະກັນແມ່ນຈໍາເປັນຕ້ອງມີ ເຊິ່ງເປັນແນວທາງທີ່ຜູ້ກູ້ຢືມຕ້ອງມີເພື່ອຄໍ້າປະກັນໃນເວລາຊໍາລະໜີ້. ຢ່າງໃດກໍຕາມ, ຫຼັກຊັບຄໍ້າປະກັນທີ່ຕ້ອງການຕົວຈິງ ແມ່ນຈະໄດ້ຮັບການພິຈາລະນາ ແລະ ອະນຸມັດໂດຍພະນັກງານສິນເຊື່ອເປັນແຕ່ລະກໍລະນີໄປ.

- ໃນກໍລະນີທີ່ບໍ່ມີໃບຕາດິນຂອບຄໍາ, ສະຖາບັນການເງິນທີ່ມີນະໂຍບາຍໃຫ້ທຶນກູ້ຢືມແກ່ຈຸນລະວິສາຫະລະກິດ ແລະ ວິສາຫະກິດຂະໜາດນ້ອຍ ທີ່ບໍ່ຂຶ້ນທະບຽນ ບາງເທື່ອ ກໍຮັບເອົາຫຼັກຊັບຄໍ້າປະກັນເຄື່ອນທີ່ໄດ້ ເຊັ່ນ: ລົດໃຫຍ່, ລົດຈັກ ຫຼື ສິນຄ້າອື່ນໆ ລວມທັງໃບຕາດິນທີ່ອອກໃຫ້ໂດຍນາຍບ້ານ. ກຸ່ມສະຖາບັນການເງິນເຫຼົ່ານີ້ຍັງມີບໍລິການ Group-Loan ສໍາລັບຈໍານວນເງິນກູ້ທີ່ໜ້ອຍກວ່າ ແລະ ໄລຍະເວລາທີ່ສັ້ນກວ່າ, ເຊິ່ງສະມາຊິກໃນກຸ່ມຮັບປະກັນໃຫ້ກັນ ແລະ ກັນ.
- ສະຖາບັນການເງິນຕ່າງໆສ່ວນໃຫຍ່ແມ່ນຕ້ອງການໃບຕາດິນຂອບຄໍາເປັນຫຼັກຊັບໃນການຄໍ້າປະກັນ.

**ສະຖານທີ່:** ທະນາຄານຕ່າງໆມີຢູ່ໃນຫຼາຍແຂວງ ແລະ ບາງເມືອງ. MFIs ສ່ວນໃຫຍ່ມີພະນັກງານທີ່ເດີນທາງໄປຫາໝູ່ບ້ານທີ່ນ້ອຍກວ່າ.

**ເງິນທຶນດອກເບ້ຍຕໍ່າສໍາລັບ MSMEs:** ທະນາຄານ ແລະ MFIs ບາງແຫ່ງ ມີບໍລິການທຶນກູ້ຢືມໃນອັດຕາດອກເບ້ຍຕໍ່າ. ຢ່າງໃດກໍຕາມ, ມັນຕ້ອງໄດ້ຮັບຊີ້ແຈງ ແລະ ໃຫ້ຂໍ້ມູນໂດຍສະຖາບັນ. ແນະນໍາໃຫ້ MSMEs ຊອກຫາໂອກາດດັ່ງກ່າວ. ໃຫ້ເບິ່ງ ຕາຕະລາງຕ່າງໆ ໃນ **ໝວດ D.2** ຖັນທີ **7**.

**ການຕັດສິນໃຈ:** ຊຸດຂໍ້ມູນນີ້ບໍ່ໄດ້ກໍານົດສະຖາບັນໃດທີ່ທ່ານຄວນກູ້ຢືມນໍາ, ເນື່ອງຈາກວ່າອັດຕາດອກເບ້ຍ, ຄ່າທໍານຽມ ແລະ ເງື່ອນໄຂຕ່າງໆ ໃນທີ່ສຸດແມ່ນຖືກກໍານົດເປັນແຕ່ລະກໍລະນີໄປ. ຂໍ້ມູນທີ່ທ່ານໄດ້ຮັບຈາກປຶ້ມຫົວນີ້ພຽງແຕ່ຊ່ວຍໃຫ້ທ່ານເຂົ້າໃຈຂັ້ນຕອນການກູ້ຢືມເງິນໄດ້ດີຂຶ້ນ ແລະ ເຮັດໃຫ້ທ່ານໝັ້ນໃຈວ່າທ່ານຄວນເລືອກໃຊ້ບໍລິການສະຖາບັນການເງິນໃດ.

# D.2 ພາບລວມ - ສະຖາບັນການເງິນຕ່າງໆ




@ILO

**ຈຸດຕ່າງໆທີ່ຄວນພິຈາລະນາ:**

1. **ຈົ່ງກຽມພ້ອມທີ່ຈະຕອບຄໍາຖາມຕ່າງໆກ່ຽວກັບທຸລະກິດຂອງທ່ານ.** ນີ້ເປັນມາດຕະຖານການປະຕິບັດຂອງສະຖາບັນເງິນຕ່າງໆ ແມ່ນເພື່ອຄໍ້າປະກັນວ່າທ່ານມີເງື່ອນໄຂທີ່ຄົບຖ້ວນເພື່ອປະເມີນລະດັບຂອງຄວາມສ່ຽງໃນການດໍາເນີນທຸລະກິດຂອງທ່ານ.

2. **ເສີມສ້າງໂອກາດຂອງທ່ານ:** ຍິ່ງທ່ານມີຄວາມໂປ່ງໃສຕໍ່ສະຖາບັນການເງິນກ່ຽວກັບທຸລະກິດ ແລະ ສະຖາບັນການເງິນຂອງທ່ານ, ສະຖາບັນກໍຍິ່ງເຫັນທ່ານເປັນລູກຄ້າທີ່ເຊື່ອຖືໄດ້. ທ່ານສາມາດເສີມຂະຫຍາຍໂອກາດຕ່າງໆຂອງທ່ານໂດຍຄໍ້າປະກັນວ່າທ່ານຈະ:
   - ສື່ສານຢ່າງກົງໄປກົງມາ ແລະ ຊື່ສັດກັບສະຖາບັນການເງິນ
   - ຢັ້ງຢືນຕົວຕົນ ແລະ ທີ່ຢູ່ທ່ານ
   - ນໍາສະເໜີວິໄສທັດທີ່ຊັດເຈນວ່າທ່ານຈະນໍາໃຊ້ ແລະ ຊໍາລະຄືນເງິນກູ້ດັ່ງກ່າວແນວໃດ
   - ຈົ່ງໝັ້ນໃຈ! ສະແດງໃຫ້ເຫັນວ່າທ່ານຈິງຈັງກັບອະນາຄົດຂອງທຸລະກິດຂອງທ່ານ

3. **ທຶນກູ້ຢືມອັດຕາດອກເບ້ຍຕໍ່າສໍາລັບ MSMEs:**

   ລັດຖະບານລາວໄດ້ສະໜອງບາງແຜນງານການລົງທຶນໃຫ້ແກ່ MSMEs ທີ່ມີຢູ່ ໂດຍຜ່ານສະຖາບັນການເງິນສະເພາະຕ່າງໆ. ກະລຸນາເບິ່ງ ຖັນທີ **7** ສໍາລັບຕົວຊີ້ບອກຂອງການມີສ່ວນຮ່ວມສໍາລັບແຕ່ລະທະນາຄານ ແລະ MFI ແລະ ອັດຕາດອກເບ້ຍທີ່ສະເໜີ. ສະຖາບັນການເງິນສາມາດແຈ້ງໃຫ້ທ່ານຊາບວ່າເງິນທຶນດັ່ງກ່າວຍັງມີຢູ່ ຫຼື ບໍ່ ແລະ ທຸລະກິດຂອງທ່ານສາມາດໄດ້ຮັບທຶນດັ່ງກ່າວ ຫຼື ບໍ່.

4. **ສະຖາບັນການເງິນທີ່ໜ້າເຊື່ອຖື:**

   ສະຖາບັນການເງິນຕ່າງໆ ເຊັ່ນ: ທະນາຄານ, ບໍລິສັດປ່ອຍສິນເຊື່ອ ແລະ MFIs ແມ່ນໄດ້ຮັບອະນຸຍາດ ແລະ ຄຸ້ມຄອງໂດຍທະນາຄານແຫ່ງ ສປປ ລາວ. ກົດລະບຽບເຫຼົ່ານີ້ຮຽກຮ້ອງໃຫ້ສະຖາບັນຕ່າງໆໃຫ້ຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບການບໍລິການຂອງພວກເຂົາ ແລະ ປະຕິບັດຕໍ່ລູກຄ້າດ້ວຍຄວາມເຄົາລົບ. ທ່ານສາມາດຊອກຫາຂໍ້ມູນທີ່ກ່ຽວຂ້ອງຫຼາຍທີ່ສຸດ, ເຊັ່ນ: ຄ່າທໍານຽມ, ອັດຕາດອກເບ້ຍ ແລະ ເງື່ອນໄຂອື່ນໆ, ໃນຫ້ອງການ ແລະ ເວັບໄຊທ໌ຂອງສະຖາບັນການເງິນຕ່າງໆ.

## ▶ ຕາຕະລາງ 1 - ທະນາຄານຕ່າງໆທີ່ປ່ອຍການເງິນໃຫ້ແກ່ MSMEs

| ທະນາຄານ | 1. ເງິນກູ້ທຸລະກິດທີ່ບໍ່ຂຶ້ນທະບຽນ | 2. ເງິນກູ້ສ່ວນບຸກຄົນ ຫຼື ຂາຍຍ່ອຍ | 3. ເງິນກູ້ທຸລະກິດທີ່ຂຶ້ນທະບຽນ | 4. ຂະໜາດເງິນກູ້ຕ່ຳສຸດ | 5. ອັດຕາດອກເບ້ຍ | 6. ຄ່າທຳນຽມ | 7. ເງິນກູ້ MSME ພິເສດ | 8. ໄລຍະເວລາກູ້ສູງສຸດ | 9. ສະຖານທີ່ |
|---|---|---|---|---|---|---|---|---|---|
| ທະນາຄານ ເອຊີລີດາ ລາວ ຈຳກັດ | | | | LAK1ລ້ານ | 7.99% - 19% | 1% | - | < 6 ປີ | ບໍ່ມີສາຂາຢູ່ໃນແຂວງ ຜົ້ງສາລີ, ຫົວພັນ ແລະ ເຂດພິເສດໄຊສົມບູນ |
| ທະນາຄານ ສົ່ງເສີມກະສິກຳ | | | | LAK50ລ້ານ | 9.5% - 13% | 1% | 5.5% | < 5 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ລາວ-ຝຣັ່ງ ຈຳກັດ | | | | LAK200ລ້ານ | 8.5% - 10% | 0.5%-1.5% | 8% | < 7 ປີ | ນະຄອນຫຼວງວຽງຈັນ, ຫຼວງພະບາງ, ແຂວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ |
| BCEL | | | | LAK50ລ້ານ | 8.25% - 9.23% | 1% | - | < 5 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ຮ່ວມພັດທະນາ | | | | LAK20ລ້ານ | 10% - 14% | 5% | - | < 5 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ລາວຈີນ | | | | LAK100ລ້ານ | 8% - 15% | 1% | 6.5%-11% | ຫຼາຍກວ່າ 5 ປີ | ນະຄອນຫຼວງວຽງຈັນເທົ່ານັ້ນ |
| ທະນາຄານ ພັດທະນາລາວ | | | | LAK80ລ້ານ | 9% - 12% | 1% | 3%-9% | < 10 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ຮ່ວມທຸລະກິດລາວ-ຫວຽດ ຈຳກັດ | | | | LAK200ລ້ານ | 6% - 12.25% | 1% | 3%-8% | < 10 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ມາຣູຮານເຈແປນລາວ | | | | LAK100ລ້ານ | 10% - 12% | 1% - 2% | 3% - 6.5% | < 10 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ພົງສະຫວັນ | | | | LAK5ລ້ານ | 10.25%-14% | 1.25% | - | < 5 ປີ | ມີສາຂາໃນທຸກແຂວງຫຼັກ |
| ທະນາຄານ ຊາຄອມແບັງລາວ | | | | LAK50ລ້ານ | 9%-12% | 1% | 3%-9% | < 10 ປີ | ມີສາຂາຢູ່ໃນແຂວງ ຫຼວງພະບາງ |
| ທະນາຄານ ເອັສທີ | | | | LAK30ລ້ານ | 10%-14% | 2% | 6.5%-7% | < 5 ປີ | ມີສາຂາໃນທຸກແຂວງຫຼັກ |

## ▶ ຕາຕະລາງ 2 - MFIs ຕ່າງໆທີ່ປ່ອຍການເງິນໃຫ້ແກ່ MSMEs

| ທະນາຄານ | 1. ເງິນກູ້ທຸລະກິດທີ່ບໍ່ຂຶ້ນທະບຽນ | 2. ເງິນກູ້ສ່ວນບຸກຄົນ | 3. ເງິນກູ້ທຸລະກິດທີ່ຂຶ້ນທະບຽນ | 4. ຂະໜາດເງິນກູ້ຕ່ຳສຸດ | 5. ອັດຕາດອກເບ້ຍ | 6. ຄ່າທຳນຽມ | 7. ເງິນກູ້ MSME ພິເສດ | 8. ໄລຍະເວລາກູ້ສູງສຸດ | 9. ສະຖານທີ່ |
|---|---|---|---|---|---|---|---|---|---|
| ສກຈບ ບີດີພີ | ມີ | ມີ | ມີ | LAK1.0ລ້ານ | 39% | 1%-3% | ມີ | < 5 ປີ | ນະຄອນຫຼວງວຽງຈັນ |
| ສກຈຮ ຈຳປາລາວ | ບໍ່ມີ | ມີ | ບໍ່ມີ | LAK1.0ລ້ານ | 12% | 0.5% | ບໍ່ມີ | < 3 ປີ | ຫຼວງພະບາງ |
| ສກຈຮ ຈຳປາສັກ | ມີ | ມີ | ມີ | LAK3.0ລ້ານ | 30% | LAK 50,000 | ມີ | < 3 ປີ | ຈຳປາສັກ, ສາລະວັນ, ເຊກອງ, ອັດຕະປື |
| ສກຈຮ ເອກພັດທະນາ | ມີ | ມີ | ມີ | LAK0.5ລ້ານ | 31.8% | 2% | LAK50-300 ລ້ານ | < 5 ປີ | ນະຄອນຫຼວງວຽງຈັນ |
| ສກຈບ ເບັກ | ມີ | ມີ | ມີ | LAK1.0ລ້ານ | 12% - 39% | 1.5% | 12% | < 2 ປີ | ນະຄອນຫຼວງວຽງຈັນ |
| ສກຈຮ ປະຕູຄຳ | ມີ | ມີ | ມີ | LAK1.0ລ້ານ | 24%-33.6% | 1% | 12% | < 5 ປີ | ນະຄອນຫຼວງວຽງຈັນ |
| ສສງ ເຊໂນ | ມີ | ມີ | ບໍ່ມີ | LAK1.0ລ້ານ | 36% | 1% | ມີ | < 3 ປີ | ສະຫວັນນະເຂດ |
| ສກຈຮ ສິນຊັບເມືອງເໜືອ | ບໍ່ມີ | ມີ | ມີ | LAK0.5ລ້ານ | 12% - 30% | 0% | 12% | < 7 ປີ | ຫຼວງພະບາງ, ໄຊຍະບູລີ, ອຸດົມໄຊ, ບໍ່ແກ້ວ, ຫຼວງນ້ຳທາ |
| ສກຈບ ໄຊອຸດົມ | | | | LAK0.5ລ້ານ | 24% - 39% | 2%-3% | 12% | < 5 ປີ | ນະຄອນຫຼວງວຽງຈັນ, ແລະແຂວງວຽງຈັນ |

# D.3 ຂໍ້ມູນຕິດຕໍ່ສໍາລັບສະຖາບັນການເງິນ MSME ຕ່າງໆ

| ສະຖາບັນການເງິນ | ເວັບໄຊທ໌ | ອີເມວ | ໂທລະສັບ | ເຟສບຸກ |
|---|---|---|---|---|
| ທະນາຄານ ເອຊີລີດາ ລາວ ຈໍາກັດ | www.acledabank.com.la | acledabank@acledabank.com.la | 1800 (Hotline)<br>021 416 999 | ACLEDA Bank Lao Ltd |
| ທະນາຄານ ສົ່ງເສີມກະສິກໍາ | www.apb.com.la | info@apb.com.la<br>head-office@apb.com.la | 030 505 7453<br>021 713 060 | APB.BANK |
| ທະນາຄານ ລາວ-ຝຣັ່ງ ຈໍາກັດ | www.bfl-bred.com | contact@bfl.la | 021 285 444 | banquefrancolao |
| BCEL | www.bcel.com.la | bcelhqv@bcel.com.la | 1555 (Hotline)<br>021 213 200 | BCEL.Bank |
| ທະນາຄານ ຮ່ວມພັດທະນາ | www.jdbbank.com.la | Info@jdbbank.com.la | 1499 (Hotline)<br>021 213 531-6 | Jdbbanklaos |
| ທະນາຄານ ລາວຈີນ | www.laochinabank.com | lncb@laochinabank.com | 021 418 888 | Laochinabank |
| ທະນາຄານ ພັດທະນາລາວ | www.ldblao.la | ldblaoho@ldblao.la | 021 213 300-03 | Ldblao |
| ທະນາຄານ ຮ່ວມທຸລະກິດ ລາວ-ຫວຽດ ຈໍາກັດ | www.laovietbank.com.la | info@laovietbank.com.la | 021 251 418 | LaoVietBank |
| ທະນາຄານ ມາຣູຮານເຈແປນ ລາວ | www. maruhanjapanbanklao.com | customercare@maruhanjapanbanklao.com info@maruhanjapanbanklao.com | 021 411 777 (Call Center)<br>021 266 000 | MaruhanJapanBankLao |
| ທະນາຄານ ພົງສະຫວັນ | phongsavanhbank.com | info@phongsavanhbank.com | 1188 (Hotline)<br>021 716 999 | phongsavanhbankltd |
| ທະນາຄານ ຊາຄອມແບັງ ລາວ | www.sacombank.com.la | Contact_sl@sacombank.com | 021- 267 979<br>021 265 725 (Fax) | SacombankLao |
| ທະນາຄານ ເອັສທີ | www.stbanklaos.la | info@stbanklaos.la | 021 241 560-2 | STBankLaos |
| ສກຈບ ບີດີພີ | www.bmimfi.com | chansada.kyophilavong@gmail.com | 021 316 505-7 | ສະຖາບັນການເງິນ ບີດີພີ (Bdp Micro Finance) |
| ສກຈຮ ຈໍາປາລາວ | ບໍ່ມີ | champalaomfi@gmail.com | 071 260 200 | ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຈໍາປາລາວ (CMFI) |
| ສກຈຮ ຈໍາປາສັກ | ບໍ່ມີ | asoulimeuangchan@gmail.com | 031 215 171-2<br>031 214 971 | ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຈໍາປາສັກ (CMIMFIOFFICIAL) |
| ສກຈຮ ເອກພັດທະນາ | www.emimfi.com | emimfi@emimfi.com | 021 244 428 | Ekhphatthana Deposit-Taking Microfinance Institution |
| ສກຈບ ເນັກ | ບໍ່ມີ | nextmfi.hq@gmail.com | 021 262 822 | Next MFI |
| ສກຈຮ ປະຕູຄໍາ | ບໍ່ມີ | gdtmfi109@yahoo.com | 021 254 100 | ສະຖາບັນການເງິນປະຕູຄໍາ (Patukham) |
| ສກຈຮ ສາຍໃຍສໍາພັນ | laomfa.org/microfinanceassociation-members-list/ | | 041-214 596 | Saiyai1123 |
| ສສງ ເຊໂນ | ບໍ່ມີ | scu2004seno@gmail.com | 041 431 430 | ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດເຊໂນ |
| ສກຈຮ ສິນຊັບເມືອງເໜືອ | ບໍ່ມີ | santy.ssmi@gmail.com | 071 252 366<br>030 922 7474 | ssmilaos |
| ສກຈບ ໄຊອຸດົມ | ບໍ່ມີ | xayoudome318@gmail.com | 021 264 843<br>023 331 822 | ສະຖາບັນການເງິນຈຸລະພາກໄຊອຸດົມ ໄຊອຸດົມ |

# ເອກະສານຊ້ອນທ້າຍ 1: ການຈັດຕັ້ງ ແລະ ສະຖິຕິທາງດ້ານກົດໝາຍ

**ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ**

**SMEs** ແມ່ນຕົວຫຍໍ້ທີ່ໃຊ້ເລື້ອຍໆສຳລັບກຸ່ມຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ. ໃນຫຼາຍປະເທດ, ແລະໃນ ສປປ ລາວ, ລັດຖະບານໄດ້ເພີ່ມປະເພດເພີ່ມເຕີມ, ນັ້ນແມ່ນຈຸນລະວິສາຫະກິດ. ຕົວຫຍໍ້ສຳລັບກຸ່ມທີ່ຄົບຖ້ວນສົມບູນຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ແມ່ນ **MSMEs.**

**ຈຸນລະວິສາຫະກິດມັກຈະບໍ່ໄດ້ຖືກກ່າວເຖິງ ແຕ່ຍັງມີລວມຢູ່**

ເຖິງແມ່ນວ່າມີພຽງແຕ່ SMEs ທີ່ມັກຈະຖືກກ່າວເຖິງຢູ່ໃນສິ່ງພິມທີ່ເປັນທາງການເທົ່ານັ້ນ, ຕາມປົກກະຕິແລ້ວ ຈຸນລະວິສາຫະກິດຍັງຖືກນຳໃຊ້ຢູ່. ຕົວຢ່າງແມ່ນ ກອງທຶນສົ່ງເສີມ SME. ເຖິງແມ່ນຈະເອີ້ນວ່າ ກອງທຶນສົ່ງເສີມ SME, ກອງທຶນດັ່ງກ່າວຍັງໃຫ້ການບໍລິການຕ່າງໆສຳລັບຈຸນລະວິສາຫະກິດ. ອີກຕົວຢ່າງໜຶ່ງແມ່ນ ສູນບໍລິການ SME, ເຊິ່ງຍັງໃຫ້ການບໍລິການຕ່າງໆແກ່ຈຸນລະວິສາຫະກິດ.

**ກົດໝາຍໄດ້ລະບຸຫຍັງແດ່ກ່ຽວກັບ MSMEs**

ກົດໝາຍວ່າດ້ວຍການສົ່ງເສີມ **SME** ໄດ້ກຳນົດໃຫ້ **SMEs** ເປັນ **“**ວິສາຫະກິດເອກະລາດທີ່ໄດ້ຂຶ້ນທະບຽນ ແລະ ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ”, ເຊິ່ງໄດ້ຖືກຈັດແບ່ງຕາມຂະໜາດໂດຍລັດຖະບານ. [1] ລັດຖະບານໄດ້ກຳນົດ SMEs ເປັນ 3 ປະເພດຄື: ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ, ແລະ ຂະໜາດກາງ:[2]

> **ຄຳວ່າ ຈຸນລະວິສາຫະກິດ ໝາຍເຖິງ** ວິສາຫະກິດທີ່ມີພະນັກງານບໍ່ເກີນ 5 ຄົນ. [3]

ເຖິງແມ່ນວ່າຈະມີພະນັກງານ 6 ຄົນຂຶ້ນໄປ, ແຕ່ວິສາຫະກິດດັ່ງກ່າວຍັງຖືວ່າເປັນຈຸນລະຢູ່ ຖ້າລາຍຮັບຕໍ່ປີຕ່ຳກວ່າ 400 ລ້ານກີບ; ຫຼື ຖ້າມູນຄ່າຊັບສິນທັງໝົດຕ່ຳກວ່າ: 100 ລ້ານກີບ (ການຜະລິດ); 150 ລ້ານກີບ (ການຄ້າ); ຫຼື 200 ລ້ານກີບ (ການບໍລິການຕ່າງໆທີ່ບໍ່ແມ່ນການຄ້າ).

> **ຄຳວ່າ ວິສາຫະກິດຂະໜາດນ້ອຍ ໝາຍເຖິງ** ວິສາຫະກິດທີ່ໃຫຍ່ກວ່າຈຸນລະວິສາຫະກິດ ເຊິ່ງກວມເອົາ 3 ເງື່ອນໄຂຄື: ຈຳນວນພະນັກງານ, ລາຍຮັບປະຈຳປີ ແລະ ມູນຄ່າຊັບສິນທັງໝົດ - ແຕ່ມີພະນັກງານບໍ່ເກີນ 50 ຄົນ.

ເຖິງແມ່ນວ່າຈະມີພະນັກງານ 51 ຄົນຂຶ້ນໄປ, ແຕ່ວິສາຫະກິດດັ່ງກ່າວຍັງຖືວ່າມີຂະໜາດນ້ອຍ ຖ້າລາຍຮັບຕໍ່ປີຕ່ຳກວ່າ: 2 ຕື້ກີບ (ການຜະລິດ); 3 ຕື້ກີບ (ການຄ້າ); ຫຼື 1,5 ຕື້ກີບ (ການບໍລິການຕ່າງໆທີ່ບໍ່ແມ່ນການຄ້າ); ຫຼື ຖ້າມູນຄ່າຊັບສິນທັງໝົດຕ່ຳກວ່າ: 1 ຕື້ກີບ (ການຜະລິດ ແລະ ການຄ້າ); ຫຼື 1,5 ຕື້ກີບ (ການບໍລິການຕ່າງໆທີ່ບໍ່ແມ່ນການຄ້າ)**.**

> **ຄຳວ່າ ວິສາຫະກິດຂະໜາດກາງ ໝາຍເຖິງ** ວິສາຫະກິດທີ່ໃຫຍ່ກວ່າວິສາຫະກິດຂະໜາດນ້ອຍ ເຊິ່ງກວມເອົາ 3 ເງື່ອນໄຂ ຄື: ຈຳນວນພະນັກງານ , ລາຍຮັບປະຈຳປີ ແລະ ມູນຄ່າຊັບສິນທັງໝົດ - ແຕ່ມີພະນັກງານບໍ່ເກີນ 99 ຄົນ.

ເຖິງແມ່ນວ່າຈະມີພະນັກງານ 100 ຄົນຂຶ້ນໄປ, ແຕ່ວິສາຫະກິດໜຶ່ງຍັງຖືວ່າມີຂະໜາດກາງ ຖ້າລາຍຮັບປະຈຳປີຕ່ຳກວ່າ: 4 ຕື້ກີບ (ການຜະລິດ ແລະ ການບໍລິການຕ່າງໆທີ່ບໍ່ແມ່ນການຄ້າ); ຫຼື 6 ຕື້ກີບ (ການຄ້າ); ຫຼື ຖ້າມູນຄ່າຊັບສິນທັງໝົດຕ່ຳກວ່າ: 4 ຕື້ກີບ (ການຜະລິດ ແລະ ການຄ້າ); 6 ຕື້ກີບ (ການບໍລິການຕ່າງໆທີ່ບໍ່ແມ່ນການຄ້າ)**.**

**ສະຖິຕິກ່ຽວກັບຈຳນວນຫົວໜ່ວຍ MSME.**

ສຳນັກງານສະຖິຕິຂອງລາວ [4] ດຳເນີນການສຳຫຼວດຢ່າງລະອຽດ ເປັນປົກກະຕິ ກ່ຽວກັບຈຳນວນຫົວໜ່ວຍວິສາຫະກິດທີ່ຄົບຖ້ວນສົມບູນຂອງ ສປປ ລາວ, ທີ່ເອີ້ນວ່າ ການສຳຫຼວດເສດຖະກິດ. ສະບັບຫຼ້າສຸດຂອງການສຳຫຼວດເສດຖະກິດໄດ້ຈັດຂຶ້ນໃນປີ 2019 ແລະ ຜົນໄດ້ຮັບໄດ້ຖືກຈັດພິມສູ່ສາທາລະນະໃນປີ 2020.

---

[1] ກົດໝາຍວ່າດ້ວຍການສົ່ງເສີມ SME (ສະບັບເລກທີ 011/NA, 21/12/2011), ມາດຕາ 2.

[2] ດຳລັດວ່າດ້ວຍການຈັດປະເພດ SME (ສະບັບເລກທີ 25/GoL, 16/01/2017).

[3] ກຳນົດເປັນຈຳນວນພະນັກງານສະເລ່ຍໃນປີ.

[4] ສ່ວນໜຶ່ງຂອງກະຊວງແຜນການ ແລະ ການລົງທຶນ ແຫ່ງ ສປປ ລາວ.

**ການສຳຫຼວດເສດຖະກິດໄດ້ສະແດງໃຫ້ເຫັນການຄົ້ນພົບທີ່ໜ້າສົນໃຈຫຼາຍຢ່າງກ່ຽວກັບ MSMEs:**

- ຈຳນວນວິສາຫະກິດທັງໝົດໃນ ສປປ ລາວ ມີ 133,997 ຫົວໜ່ວຍ.
- ໃນຈຳນວນວິສາຫະກິດທັງໝົດນີ້, 133,721 (99,8%) ຖືກຈັດປະເພດເປັນ MSME – ມີພຽງແຕ່ 276 ວິສາຫະກິດ (0,2%) ເທົ່ານັ້ນທີ່ຖືກຈັດປະເພດເປັນຂະໜາດໃຫຍ່.
- ໃນຈຳນວນຂອງກຸ່ມ MSMEs ທັງໝົດ, 99.3% ຖືກຈັດປະເພດເປັນຈຸນລະວິສາຫະກິດ ຫຼື ວິສາຫະກິດຂະໜາດນ້ອຍ.
- ມີວິສາຫະກິດພຽງແຕ່ 30% ທີ່ໄດ້ຂຶ້ນທະບຽນກັບກະຊວງອຸດສາຫະກຳ ແລະ ການຄ້າ.
- ມີພຽງແຕ່ 22% ຂອງວິສາຫະກິດທີ່ມີໃບອະນຸຍາດດຳເນີນການຈາກໜ່ວຍງານລັດຖະບານທີ່ຄຸ້ມຄອງຂະແໜງການຂອງຕົນ.
- ມີພຽງແຕ່ 4% ຂອງວິສາຫະກິດທີ່ມີລະບົບການຄຸ້ມຄອງທາງດ້ານທຸລະກິດ.

**ຕາຕະລາງ: ພາບລວມຂອງຈຳນວນຫົວໜ່ວຍວິສາຫະກິດ ຂອງ ສປປ ລາວ**

| ຈຳນວນຫົວໜ່ວຍຂອງວິສາຫະກິດ (2019) | ຈຳນວນວິສາຫະກິດ | % ຂອງວິສາຫະກິດ | ບໍ່ມີການເອົາສິນເຊື່ອ | ບໍ່ຂຶ້ນທະບຽນ | ບໍ່ມີໃບອະນຸຍາດ | ບໍ່ມີລະບົບການຄຸ້ມຄອງທາງດ້ານທຸລະກິດ |
|---|---|---|---|---|---|---|
| ຈຸນລະວິສາຫະກິດ | 126,168 | 94% | 91% | 73% | 80% | 98% |
| ວິສາຫະກິດຂະໜາດນ້ອຍ | 6,600 | 5% | 75% | 23% | 55% | 79% |
| ວິສາຫະກິດຂະໜາດກາງ | 954 | 0.7% | 70% | 6% | 27% | 32% |
| ວິສາຫະກິດຂະໜາດໃຫຍ່ | 276 | 0.2% | 73% | - | 15% | 11% |
| **ວິສາຫະກິດທັງໝົດ** | **133,997** | **100%** | **90%** | **70%** | **78%** | **96%** |

**ວິສາຫະກິດຈຳນວນໜ້ອຍດຳເນີນທຸລະກິດຢ່າງເຕັມຮູບແບບຕາມລະບຽບກົດໝາຍທີ່ມີ.**

ຂໍ້ມູນທາງການຈາກອົງການປະກັນສັງຄົມຂອງລາວ ສະແດງໃຫ້ເຫັນວ່າ ວິສາຫະກິດພຽງແຕ່ 1.9% (ປີ 2020) ຕອບສະໜອງໄດ້ຕາມເງື່ອນໄຂທາງດ້ານກົດໝາຍ ໃນການເຂົ້າຮ່ວມກອງທຶນປະກັນສັງຄົມແຫ່ງຊາດ. ອີງຕາມຄຳນິຍາມທາງການທີ່ລະບຸໃນກົດໝາຍວ່າດ້ວຍການສົ່ງເສີມ SME ຮຽກຮ້ອງໃຫ້ວິສາຫະກິດຂຶ້ນທະບຽນ ແລະ ດຳເນີນທຸລະກິດຢ່າງຖືກຕ້ອງຕາມກົດໝາຍທີ່ກຳນົດໄວ້, ໂດຍສະຫຼຸບແລ້ວ ມີວິສາຫະກິດຈຳນວນໜ້ອຍທີ່ເຂົ້າເງື່ອນໄຂໃນການເປັນ SME ໄດ້ - ອີງຕາມກົດໝາຍ. ສະຖາບັນສະຖິຕິແຫ່ງຊາດລາວໄດ້ຮັບຮູ້ຄວາມເປັນຈິງນີ້ ແລະ ກຳນົດວິສາຫະກິດໂດຍອີງໃສ່ມາດຖານຂອງການປະກອບສ່ວນເຂົ້າໃນການຜະລິດເສດຖະກິດ ແລະ ການສ້າງລາຍຮັບ, ໂດຍບໍ່ຄຳນຶງເຖິງການປະຕິບັດຕາມກົດໝາຍ.

**ການມີສ່ວນຮ່ວມໃນການໃຫ້ຂໍ້ມູນຂອງສະຖາບັນການເງິນຢູ່ໃນຊຸດຂໍ້ມູນນີ້**

ສະຖາບັນການເງິນຕ່າງໆທີ່ລວມຢູ່ໃນຊຸດຂໍ້ມູນນີ້ໄດ້ຖືກລະບຸໄວ້ໂດຍອີງໃສ່ການພິຈາລະນາຢ່າງຮອບຄອບໂດຍຜູ້ຕາງໜ້າຂອງສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອົງການແຮງງານສາກົນ ແລະ ອົງການແພລນ ປະຈຳ ສປປ ລາວ. ຈາກທັງໝົດ 230 ສະຖາບັນການເງິນທີ່ມີຢູ່ໃນລາວ, ການຄັດເລືອກບັນດາສະຖາບັນການເງິນ ທີ່ໃຫ້ຂໍ້ມູນເຫຼົ່ານີ້ແມ່ນອີງໃສ່ນະໂຍບາຍຂອງສະຖາບັນດັ່ງກ່າວທີ່ມີຄວາມແທດເໝາະ ແລະ ໃກ້ຄຽງຄວາມເປັນຈິງ ໃນການສະໜອງທຶນໃຫ້ແກ່ SMEs ເຊິ່ງ SMEs ເຫຼົ່ານີ້ກວມເອົາສັດສ່ວນເກືອບທັງໝົດຂອງຫົວໜ່ວຍວິສາຫະກິດ ທັງໝົດໃນ ສປປ ລາວ ແລະ ວິສາຫະກິດທີ່ເຂົ້າຮ່ວມແຜນງານການສົ່ງເສີມ SME ຢ່າງເປັນທາງການຂອງລັດຖະບານ - ໂດຍຜ່ານກອງທຶນສົ່ງເສີມ SME, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານແຫ່ງ ສປປ ລາວ ຫຼື ກະຊວງກະສິກຳ ແລະ ປ່າໄມ້.

ຕິດຕໍ່:

**ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ**
ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
**ຕູ້ໄປສະນີ: 4596**

**ສູນບໍລິການ SME ນະຄອນຫຼວງວຽງຈັນ:**
ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ
ຖະໜົນ ໄກສອນພົມວິຫານ, ບ້ານ ໂພນພະເນົາ
ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
**+856 (0) 21 416266-7**
**https://smlaos.com/**